ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 079 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 03.06.2015.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ກົດໝາຍ

## ວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

---

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 018/ສພຊ, ລົງວັນທີ 26 ທັນວາ 2014;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 07/ຄປຈ, ລົງວັນທີ 22 ມັງກອນ 2015.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1. ປະກາດໃຊ້ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

ມາດຕາ 2. ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

**ຈູມມາລີ ໄຊຍະສອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 018 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງ ສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 26 ທັນວາ 2014

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u> ຮັບຮອງເອົາກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

<u>ມາດຕາ 2</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2014

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 59 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2014

# ກົດໝາຍ
# ວ່າດ້ວຍ ການເຂົ້າ-ອອກ
# ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີປະສິດທິພາບ, ການບໍລິການມີຄວາມວ່ອງໄວ, ທັນສະໄໝ ແນໃສ່ປົກປ້ອງອະທິປະໄຕ, ຄວາມໝັ້ນຄົງຂອງຊາດ, ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ການເຂົ້າ-ອອກ ສປປ ລາວ**

ການເຂົ້າ-ອອກ ສປປ ລາວ ແມ່ນ ການເດີນທາງເຂົ້າ-ອອກປະເທດ ຂອງພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ພ້ອມດ້ວຍພາຫະນະໂດຍມີການແຈ້ງເອກະສານຢ່າງຖືກຕ້ອງ ຄົບຖ້ວນ ຕາມລະບຽບການ.

ການຄຸ້ມຄອງການເຂົ້າ-ອອກ ສປປ ລາວ ແມ່ນ ການອຳນວຍຄວາມສະດວກ, ຄວບຄຸມ, ຕິດຕາມ ແລະ ກວດກາ ການເດີນທາງເຂົ້າ-ອອກ ສປປ ລາວ.

**ມາດຕາ 3 ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ**

ຄົນຕ່າງປະເທດ ແມ່ນ ຄົນທີ່ຖືສັນຊາດອື່ນ ລວມທັງຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ຊຶ່ງເຂົ້າມາ ສປປ ລາວ ເພື່ອ ຢ້ຽມຢາມ, ທ່ອງທ່ຽວ, ເຄື່ອນໄຫວວຽກງານໃດໜຶ່ງ ເປັນທາງການ ຫຼື ບໍ່ເປັນທາງການ ໂດຍມີກຳນົດເວລາ ແລະ ດຳລົງຊີວິດຢູ່ ສປປ ລາວ.

ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ແມ່ນ ການອຳນວຍຄວາມສະດວກ, ການຕິດຕາມ, ກວດກາ ການເຄື່ອນໄຫວຂອງຄົນຕ່າງປະເທດ ທີ່ເຂົ້າມາປະຕິບັດໜ້າທີ່, ດຳເນີນທຸລະກິດ, ຢ້ຽມຢາມ, ທ່ອງທ່ຽວ ຫຼື ມາເຮັດວຽກໂດຍມີກຳນົດເວລາ ແລະ ດຳລົງຊີວິດຢູ່ ສປປ ລາວ.

**ມາດຕາ 4 ການອະທິບາຍຄຳສັບ**

ຄຳສັບທີ່ໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ດ່ານເຂົ້າ-ອອກ ສປປ ລາວ** ໝາຍເຖິງ ສະຖານທີ່ກວດກາການເຂົ້າ-ອອກປະເທດ ທີ່ທາງການກຳນົດ ຊຶ່ງປະກອບດ້ວຍ ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ;

2. **ດ່ານສາກົນ** ໝາຍເຖິງ ສະຖານທີ່ ທີ່ອະນຸຍາດໃຫ້ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ສາມາດເດີນທາງເຂົ້າ-ອອກ ໂດຍນຳໃຊ້ ໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ຫຼື ເອກະສານເດີນທາງອື່ນທີ່ໃຊ້ແທນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

3. **ດ່ານທ້ອງຖິ່ນ** ໝາຍເຖິງ ສະຖານທີ່ ທີ່ອະນຸຍາດໃຫ້ສະເພາະພົນລະເມືອງລາວ ແລະ ພົນລະເມືອງຂອງປະເທດທີ່ມີຊາຍແດນຕິດຈອດກັບແຂວງໃກ້ຄຽງ ຂອງ ສປປ ລາວ ສາມາດເດີນທາງເຂົ້າ-ອອກ ຕາມການຕົກລົງຢ່າງເປັນທາງການຂອງສອງຝ່າຍ ໂດຍນຳໃຊ້ໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ຫຼື ເອກະສານເດີນທາງອື່ນທີ່ໃຊ້ແທນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. **ດ່ານປະເພນີ** ໝາຍເຖິງ ສະຖານທີ່ ທີ່ອະນຸຍາດ ໃຫ້ສະເພາະພົນລະເມືອງລາວ ແລະ ພົນລະເມືອງຂອງປະເທດໃກ້ຄຽງ ຊຶ່ງມີພູມລຳເນົາຖາວອນ ຢູ່ ບໍລິເວນຊາຍແດນ ຫຼື ເມືອງ ເຊິ່ງໜ້າກັບ ສປປ ລາວ ສາມາດເດີນທາງເຂົ້າ-ອອກ ຕາມການຕົກລົງຂອງສອງຝ່າຍ ໂດຍນຳໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

5. **ຄົນເຊື້ອຊາດລາວ** ໝາຍເຖິງ ບຸກຄົນທີ່ເກີດຢູ່ ສປປ ລາວ ແລະ ມີສັນຊາດລາວໂດຍກຳເນີດ ຫຼື ຜູ້ທີ່ເກີດຢູ່ຕ່າງປະເທດ ຊຶ່ງພໍ່ ຫຼື ແມ່ເກີດຢູ່ ສປປ ລາວ ແລະ ມີສັນຊາດລາວໂດຍກຳເນີດ;

6. **ບັດປະຈຳຕົວ** ໝາຍເຖິງ ບັດຢັ້ງຢືນສະຖານະພາບ ຊຶ່ງອອກໃຫ້ຄົນຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍສະບັບນີ້;

7. **ບັດອະນຸຍາດພັກເຊົາ** ໝາຍເຖິງ ບັດຢັ້ງຢືນການໃຫ້ພັກເຊົາ ໂດຍມີກຳນົດ ຊຶ່ງອອກໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້;

8. **ການຂຶ້ນທະບຽນພັກເຊົາ** ໝາຍເຖິງ ການອະນຸຍາດໃຫ້ພັກເຊົາແກ່ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 33 ຂອງກົດໝາຍສະບັບນີ້;

9. **ວີຊາ** ໝາຍເຖິງ ການອະນຸຍາດໃຫ້ເຂົ້າ-ອອກປະເທດໃດໜຶ່ງ;

10. **ສະມາຊິກຄອບຄົວ** ໝາຍເຖິງ ຜົວ, ເມຍ ແລະ ລູກ;

11. **ພາຫະນະທີ່ນຳເອົາຜູ້ໂດຍສານເຂົ້າ-ອອກ ສປປ ລາວ** ໝາຍເຖິງ ລົດ, ລົດໄຟ, ເຮືອ, ເຮືອບິນ ທຸກປະເພດ ຫຼື ສິ່ງໃດໜຶ່ງ ທີ່ເຄື່ອນຍ້າຍດ້ວຍເຄື່ອງຈັກ, ໃຊ້ແຮງຄົນ ຫຼື ແຮງສັດ.

**ມາດຕາ 5 ນະໂຍບາຍຂອງລັດ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ**

ລັດ ສົ່ງເສີມ, ຊຸກຍູ້ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ດ້ວຍການສ້າງພື້ນຖານໂຄງລ່າງໃຫ້ເປັນລະບົບຄົບຊຸດ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນຮັບໃຊ້ເຂົ້າໃນວຽກງານດັ່ງກ່າວ ເພື່ອໃຫ້ມີຄວາມຖືກຕ້ອງ, ຄ່ອງຕົວ, ເຂັ້ມແຂງ ແລະ ທັນສະໄໝ.

**ມາດຕາ 6 ຫຼັກການເຄື່ອນໄຫວວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ**

ການເຄື່ອນໄຫວວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ລະບຽບການ, ສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
2. ຮັບປະກັນການບໍລິການທີ່ສະດວກ, ວ່ອງໄວ, ໂປ່ງໃສ ແລະ ທັນສະໄໝ;
3. ຄຸ້ມຄອງລວມສູນຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ;
4. ຮັບປະກັນຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ນິຕິບຸກຄົນ, ການຈັດຕັ້ງ, ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ເຂົ້າ-ອອກ, ເຄື່ອນໄຫວ ແລະ ດຳລົງຊີວິດ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ດ້ວຍການແລກປ່ຽນບົດຮຽນ, ເຕັກໂນໂລຊີ, ຂໍ້ມູນຂ່າວສານ, ການບຳລຸງ ຍົກລະດັບຄວາມຮູ້ດ້ານວິຊາສະເພາະ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ, ປະຕິບັດຕາມ ສົນທິສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການເຂົ້າ-ອອກ ສປປ ລາວ
### ໝວດທີ 1
### ເງື່ອນໄຂການເຂົ້າ-ອອກ ສປປ ລາວ

**ມາດຕາ 9 ເງື່ອນໄຂລວມໃນການເຂົ້າ-ອອກ ສປປ ລາວ**

ເງື່ອນໄຂລວມຂອງບຸກຄົນທີ່ເຂົ້າ-ອອກ ສປປ ລາວ ມີ ດັ່ງນີ້:

1. ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕ້ອງຖືເອກະສານ ເດີນທາງຢ່າງຖືກຕ້ອງ, ຄົບຖ້ວນ ແລະ ສົມບູນ;

2. ບຸກຄົນທີ່ມີໜັງສືຜ່ານແດນຢ່າງຖືກຕ້ອງ, ຄົບຖ້ວນ, ສົມບູນ, ຫຼາຍເຫຼັ້ມ, ຫຼາຍສັນຊາດ ໃຫ້ຖືເອົາເຫຼັ້ມທີ່ນຳໃຊ້ແຈ້ງອອກຈາກປະຕູດ່ານເຊິ່ງໜ້າ ຫຼື ດ່ານສຸດທ້າຍ ກ່ອນຈະມາເຖິງ ສປປ ລາວ ເປັນເອກະສານເດີນທາງສຳລັບເຂົ້າ ສປປ ລາວ;

3. ບຸກຄົນທີ່ມີໜັງສືຜ່ານແດນຢ່າງຖືກຕ້ອງ, ຄົບຖ້ວນ, ສົມບູນທີ່ໄດ້ຮັບການປະທັບຕາແຈ້ງເຂົ້າ ຈາກເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ຫຼື ໄດ້ຮັບອະນຸຍາດຕໍ່ເວລາພັກເຊົາຊົ່ວຄາວ ຢູ່ ສປປ ລາວ ຢ່າງຖືກຕ້ອງນັ້ນ ໃນເວລາເດີນທາງອອກຈາກ ສປປ ລາວ ໃຫ້ນຳໃຊ້ໜັງສືຜ່ານແດນເຫຼັ້ມດັ່ງກ່າວ;

4. ບຸກຄົນ ທີ່ມາຈາກປະເທດທີ່ບໍ່ຮຽກຮ້ອງໃຫ້ມີການປະທັບຕາແຈ້ງເຂົ້າ-ອອກ ລົງໃນເອກະສານເດີນທາງຂອງຜູ້ເຂົ້າ-ອອກ ໃຫ້ປະຕິບັດຕາມສັນຍາທະວິພາຄີ ຫຼື ຕາມການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ;

5. ກໍລະນີ ໜັງສືຜ່ານແດນ ຖືກເສຍຫາຍ ຫຼື ໃຊ້ການບໍ່ໄດ້ ຕ້ອງມີເອກະສານຢັ້ງຢືນຈາກເຈົ້າໜ້າທີ່ຕຳຫຼວດປະຈຳພື້ນທີ່ ແລະ ເຈົ້າໜ້າທີ່ຂອງກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເພື່ອຂໍເຮັດໜັງສືຜ່ານແດນເຫຼັ້ມໃໝ່ ຈາກສະຖານເອກອັກຄະລັດຖະທູດ, ສະຖານກົງສຸນຂອງຕົນ ແລະ ຂໍວີຊາແຈ້ງອອກ ຈາກກະຊວງການຕ່າງປະເທດ ຈຶ່ງສາມາດເດີນທາງອອກ ສປປ ລາວ.

ສຳລັບ ເອກະສານເດີນທາງອື່ນ ໃຫ້ປະຕິບັດຕາມລະບຽບການຕ່າງຫາກ.

### ມາດຕາ 10 ການເຂົ້າ-ອອກ ສປປ ລາວ ຂອງ ພົນລະເມືອງລາວ ແລະ ຄົນຕ່າງດ້າວ

ການເຂົ້າ-ອອກ ສປປ ລາວ ຂອງພົນລະເມືອງລາວ ໃຫ້ປະຕິບັດ ດັ່ງນີ້:

1. ມີວິຊາແຈ້ງເຂົ້າປະເທດທີ່ຈະໄປນັ້ນ; ສຳລັບປະເທດທີ່ມີສັນຍາຍົກເວັ້ນວິຊາກັບ ສປປ ລາວ ໃຫ້ປະຕິບັດຕາມສັນຍານັ້ນ;

2. ໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ເມື່ອເດີນທາງເຂົ້າ-ອອກ ສປປ ລາວ ກັບປະເທດທີ່ມີຊາຍແດນຕິດຈອດ ຕາມສັນຍາສອງຝ່າຍລະຫວ່າງ ສປປ ລາວ ກັບປະເທດດັ່ງກ່າວ;

3. ໃຊ້ໜັງສືຜ່ານແດນເຂົ້າ-ອອກ ສປປ ລາວ ແລະ ແຈ້ງເຂົ້າ-ອອກ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ;

4. ມີເອກະສານຢັ້ງຢືນຢ່າງເປັນທາງການ ຈາກອົງການທີ່ກ່ຽວຂ້ອງ ມາແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ສຳລັບຜູ້ໃຊ້ໜັງສືຜ່ານແດນການທູດ ແລະ ທາງລັດຖະການ.

ສຳລັບ ຄົນຕ່າງດ້າວ ທີ່ເຂົ້າ-ອອກ ສປປ ລາວ ໃຫ້ແຈ້ງໜັງສືຜ່ານແດນ, ບັດປະຈຳຕົວ ຫຼື ສຳເນົາສຳມະໂນຄົວຄົນຕ່າງດ້າວຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ.

### ມາດຕາ 11 ການເຂົ້າ-ອອກ ສປປ ລາວ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ

ການເຂົ້າ-ອອກ ສປປ ລາວ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ປະຕິບັດ ດັ່ງນີ້:

1. ປະຕິບັດຕາມສັນຍາສອງຝ່າຍ ສຳລັບຜູ້ຖືໜັງສືຜ່ານແດນການທູດ, ລັດຖະການ ແລະ ທຳມະດາຂອງປະເທດທີ່ມີສັນຍາຍົກເວັ້ນ ວິຊາການທູດ, ລັດຖະການ ແລະ ທຳມະດາ ກັບ ສປປ ລາວ;

2. ປະຕິບັດຕາມຂັ້ນຕອນໃນການຂໍວິຊາກ່ອນເຂົ້າມາສຳລັບຜູ້ຖືໜັງສືຜ່ານແດນການທູດ, ລັດຖະການ ແລະ ທຳມະດາ ຂອງປະເທດທີ່ບໍ່ມີສັນຍາຍົກເວັ້ນວິຊາກັບ ສປປ ລາວ;

3. ປະຕິບັດຕາມການຕົກລົງຂອງລັດຖະບານ ແຫ່ງ ສປປ ລາວ ສຳລັບພົນລະເມືອງຂອງປະເທດທີ່ ສປປ ລາວ ໄດ້ຍົກເວັ້ນວິຊາໃຫ້ຝ່າຍດຽວ;

4. ແຈ້ງເຂົ້າ-ອອກ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ;

5. ປະຕິບັດຕາມສັນຍາສອງຝ່າຍ ສຳລັບຜູ້ຢູ່ປະເທດໃກ້ຄຽງທີ່ຖືໜັງສືຜ່ານແດນ, ປຶ້ມຜ່ານແດນ ຫຼື ໃບຜ່ານແດນເຂົ້າມາ ສປປ ລາວ.

ສຳລັບພະນັກງານຈຸບິນ ຕາມຖ້ຽວບິນປົກກະຕິຂອງສາຍການບິນພົນລະເຮືອນ ຂອງປະເທດທີ່ມີສັນຍາ ກັບ ສປປ ລາວ ທີ່ຖືໜັງສືຢັ້ງຢືນສະຖານະພາບພະນັກງານຈຸບິນ ຂອງສາຍການບິນປະເທດດັ່ງກ່າວ ເມື່ອມີຈຸດປະສົງພັກຄ້າງຄືນຢູ່ພາຍໃນເມືອງບ່ອນສະໜາມບິນຕັ້ງຢູ່ ຈະໄດ້ຮັບອະນຸຍາດໃຫ້ເຂົ້າ-ອອກ ແລະ ພັກເຊົາ ຢູ່ ສປປ ລາວ ບໍ່ໃຫ້ເກີນ ຊາວສີ່ຊົ່ວໂມງ ແຕ່ຕ້ອງຜ່ານການກວດກາຂອງເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳສະໜາມບິນ ຕາມລະບຽບການສາກົນ.

### ມາດຕາ 12 ການບໍ່ອະນຸຍາດໃຫ້ເຂົ້າ ສປປ ລາວ

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ບໍ່ອະນຸຍາດໃຫ້ເຂົ້າ ສປປ ລາວ ມີ ດັ່ງນີ້:

1. ບຸກຄົນທີ່ໄດ້ເຄື່ອນໄຫວ ລ່ວງລະເມີດຕໍ່ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຜົນປະໂຫຍດລວມຂອງຊາດ ລວມທັງບຸກຄົນທີ່ເຮັດໃຫ້ຊາດລາວເສື່ອມເສຍກຽດ ແລະ ຊື່ສຽງ;

2. ບຸກຄົນທີ່ໄດ້ກໍ່ການໂຈລະກຳ ຫຼື ພົວພັນເຖິງການໂຈລະກຳລະຫວ່າງຊາດ, ການກໍ່ການຮ້າຍ, ການກໍ່ອາຊະຍາກຳຂ້າມຊາດ, ການຄ້າມະນຸດ, ການລັກລອບເຂົ້າ-ອອກ ຫຼື ເອົາຄົນເຂົ້າ-ອອກ ສປປ ລາວ, ການຄ້າປະເວນີ, ການຄ້າໂສເພນີ ແລະ ການລ່ວງລະເມີດທາງເພດ ຫຼື ມີຂໍ້ມູນກ່ຽວກັບອາຊະຍາກຳດັ່ງກ່າວ;

3. ບຸກຄົນທີ່ຢູ່ໃນບັນຊີຫ້າມເຂົ້າ ສປປ ລາວ;

4. ບຸກຄົນທີ່ນຳໃຊ້ເອກະສານເດີນທາງທີ່ບໍ່ຖືກຕ້ອງ ເຊັ່ນ ຂອງຄົນອື່ນ, ປອມ, ປ່ຽນແປງຂໍ້ມູນບາງສ່ວນ, ບໍ່ຄົບຖ້ວນ ຫຼື ບໍ່ສົມບູນ;

5. ບຸກຄົນທີ່ມີຖານະທາງດ້ານການເງິນບໍ່ພຽງພໍ ສຳລັບໄລຍະເວລາທີ່ຈະພັກເຊົາຊົ່ວຄາວຢູ່ ສປປ ລາວ;

6. ບຸກຄົນທີ່ມີພະຍາດຕິດແປດ, ຊຳເຮື້ອຮ້າຍແຮງ ຕາມລະບຽບການສາກົນ ແລະ ແຈ້ງການຂອງພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 13 ການບໍ່ອະນຸຍາດໃຫ້ອອກ ສປປ ລາວ

ບຸກຄົນທີ່ບໍ່ອະນຸຍາດໃຫ້ອອກ ສປປ ລາວ ມີ ດັ່ງນີ້:

1. ບຸກຄົນທີ່ໄດ້ເຄື່ອນໄຫວ ລ່ວງລະເມີດຕໍ່ຄວາມໝັ້ນຄົງ, ຄວາມສະຫງົບ ແລະ ຜົນປະໂຫຍດລວມຂອງຊາດ ລວມທັງບຸກຄົນທີ່ເຮັດໃຫ້ຊາດລາວເສື່ອມເສຍກຽດ ແລະ ຊື່ສຽງ;

2. ບຸກຄົນທີ່ນຳໃຊ້ເອກະສານເດີນທາງທີ່ບໍ່ຖືກຕ້ອງ ເຊັ່ນ ຂອງຄົນອື່ນ, ປອມ, ປ່ຽນແປງຂໍ້ມູນບາງສ່ວນ, ບໍ່ຄົບຖ້ວນ ຫຼື ບໍ່ສົມບູນ;

3. ບຸກຄົນທີ່ພົວພັນເຖິງຄະດີອາຍາ ຫຼື ຄະດີແພ່ງ ຊຶ່ງຍັງຢູ່ໃນຂັ້ນຕອນຂອງການດຳເນີນຄະດີ ຫຼື ປະຕິບັດຄ່າປັບໃໝ, ການໃຊ້ແທນທາງແພ່ງ ຍັງບໍ່ທັນສຳເລັດຕາມການສະເໜີຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ພາກສ່ວນທີ່ກ່ຽວຂ້ອງ, ເຈົ້າໜ້າທີ່ ທີ່ມີຂໍ້ມູນ ຫຼື ຄູ່ກໍລະນີ.

## ໝວດທີ 2
## ຄວາມຮັບຜິດຊອບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຊ້ພາຫະນະເຂົ້າ-ອອກ ສປປ ລາວ

**ມາດຕາ 14 ພາຫະນະທີ່ນຳເອົາຜູ້ໂດຍສານເຂົ້າ-ອອກ ສປປ ລາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຊ້ພາຫະນະນຳເອົາຜູ້ໂດຍສານເຂົ້າ-ອອກ ສປປ ລາວ ຕ້ອງເຂົ້າ-ອອກຕາມດ່ານທີ່ທາງການກຳນົດໄວ້, ແຈ້ງພາຫະນະ, ວັນເວລາເຂົ້າ-ອອກໃຫ້ລະອຽດ, ຊັດເຈນ ຕໍ່ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ຕາມລະບຽບການ ພ້ອມທັງແຈ້ງບັນຊີລາຍຊື່ຜູ້ໂດຍສານ.

ສຳລັບ ເຮືອບິນທີ່ຂົນສົ່ງຜູ້ໂດຍສານ ສາຍພາຍໃນ ແລະ ສາຍຕ່າງປະເທດນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 15 ຄວາມຮັບຜິດຊອບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຊ້ພາຫະນະເຂົ້າ-ອອກ ສປປ ລາວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໃຊ້ພາຫະນະເຂົ້າ-ອອກ ສປປ ລາວ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ໃຫ້ການຮ່ວມມືກັບເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ; ເມື່ອມີການສົງໄສ ຫຼື ມີຂໍ້ມູນກ່ຽວກັບການລະເມີດກົດໝາຍ ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານສາມາດກວດຄົ້ນຜູ້ໂດຍສານ, ພາຫະນະ ຫຼື ເຄື່ອງຂອງສ່ວນຕົວ ທີ່ບໍ່ຢູ່ໃນລາຍການສິນຄ້າ;

2. ໃຊ້ຈ່າຍຄ່າ ກິນຢູ່ພັກເຊົາ ແລະ ຄ່າໃຊ້ຈ່າຍຕ່າງໆ ລວມທັງການສົ່ງຜູ້ໂດຍສານອອກຈາກ ສປປ ລາວ ໃນກໍລະນີທີ່ຜູ້ກ່ຽວນຳເອົາຜູ້ໂດຍສານເຂົ້າມາໂດຍບໍ່ຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ 9, 12 ແລະ 13 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ການຄຸ້ມຄອງ ແລະ ການປ້ອງກັນດ່ານ

**ມາດຕາ 16 ການຄຸ້ມຄອງດ່ານ**

ການຄຸ້ມຄອງດ່ານກວດຄົນເຂົ້າ-ອອກ ສປປ ລາວ ແມ່ນ ການຄວບຄຸມ, ການຈັດສັນຄວາມເປັນລະບຽບຮຽບຮ້ອຍ, ການຕິດຕາມ ແລະ ກວດກາສະພາບການ ທີ່ກ່ຽວຂ້ອງກັບການເຂົ້າ-ອອກໃນບໍລິເວນດ່ານ ໃຫ້ເຂັ້ມງວດ, ຮັບປະກັນຄວາມສະຫງົບ ແລະ ຄວາມປອດໄພ.

**ມາດຕາ 17 ການຄຸ້ມຄອງລະບົບເຕັກນິກ**

ການຄຸ້ມຄອງລະບົບເຕັກນິກ ແມ່ນ ການນຳໃຊ້ວັດຖຸປະກອນເຕັກນິກ-ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການ ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຄຸ້ມຄອງການເຂົ້າ-ອອກ ສປປ ລາວ ໃຫ້ມີຄວາມຮັບປະກັນທາງດ້ານວິຊາສະເພາະ ແລະ ສາມາດເຊື່ອມໂຍງຖານຂໍ້ມູນ-ຂ່າວສານ ໃຫ້ມີຄວາມເປັນເອກະພາບ, ວ່ອງໄວ ແລະ ທັນການ.

**ມາດຕາ 18 ການປ້ອງກັນດ່ານ**

ການປ້ອງກັນດ່ານ ແມ່ນ ການຊອກຮູ້, ກຳສະພາບຮອບດ້ານ ໃນບໍລິເວນດ່ານເຂົ້າ-ອອກ ສປປ ລາວ ກ່ຽວກັບການເຄື່ອນໄຫວຂອງ ບຸກຄົນ, ກຸ່ມຄົນບໍ່ດີ ທີ່ຈະສວຍໃຊ້ການເຂົ້າ-ອອກ ສປປ ລາວ ກໍ່ຄວາມບໍ່ສະຫງົບ, ຄວາມເສັຍຫາຍ ເພື່ອປ້ອງກັນ, ສະກັດກັ້ນ ແລະ ຕອບຕ້ານ ຢ່າງທັນການ.

ໃນກໍລະນີທີ່ເກີດມີສະພາວະສຸກເສີນ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ ຢູ່ບໍລິເວນດ່ານ ຫຼື ຊາຍແດນ ເຈົ້າໜ້າທີ່ຕຳຫຼວດປະຈຳດ່ານ ຕ້ອງຈັດຕັ້ງກຳລັງ ແລະ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂ ຢ່າງທັນການ.

ສຳລັບ ຂັ້ນຕອນ ແລະ ລະບຽບການ ໃນການແກ້ໄຂສະພາວະສຸກເສີນນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍວຽກງານປ້ອງກັນຄວາມສະຫງົບແຫ່ງຊາດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 4
## ປະເພດ ແລະ ການອອກວີຊາເຂົ້າ-ອອກ ສປປ ລາວ

**ມາດຕາ 19 ປະເພດວີຊາ**

ປະເພດວີຊາເຂົ້າ-ອອກ ສປປ ລາວ ມີ ດັ່ງນີ້:

1. ວີຊາການທູດ (D-A1)
2. ວີຊາລັດຖະການ (S-A2)

3. ວີຊາຜົວ ຫຼື ເມັຍ (SP-B3)
4. ວີຊາອັດທະຍາໄສ (C-B1)
5. ວີຊາທ່ອງທ່ຽວ (T-B3)
6. ວີຊາໄລຍະສັ້ນ (NI-B3)
7. ວີຊາໄລຍະຍາວ (I-B3)
8. ວີຊາຖາວອນ (P-B3)
9. ວີຊາຊ່ຽວຊານ (E-B2)
10. ວີຊາຜ່ານ (TR-B3)
11. ວີຊາທຸລະກິດ (NI-B2 ຫຼື I-B2)
12. ວີຊານັກສຶກສາ (ST-B2)
13. ວີຊານັກຂ່າວ (M-B2)
14. ວີຊາແຮງງານ (LA-B2)

ໃນກໍລະນີ ທີ່ໜັງສືຜ່ານແດນຍັງມີອາຍຸໃຊ້ໄດ້ ແຕ່ໝົດໜ້າປະທັບຕາ ສຳລັບວີຊາ, ໜັງສືຜ່ານແດນ ຂອງຄົນຕ່າງປະເທດ ຫຼື ເຂດແຄວ້ນ ທີ່ ສປປ ລາວ ຍັງບໍ່ທັນມີສາຍພົວພັນການທູດ ຫຼື ສາຍພົວພັນທາງກົງສຸນ ແລະ ຍ້ອນເຫດຜົນທາງການທູດ ຫຼື ຄວາມໝັ້ນຄົງ ເຈົ້າໜ້າທີ່ສະຖານທູດ ຫຼື ສະຖານກົງສຸນ ຫຼື ເຈົ້າໜ້າທີ່ໜ່ວຍງານວີຊາກັບດ່ານສາກົນຈະອອກໃບວີຊາປົວໃຫ້.

**ມາດຕາ 20 ການອອກວີຊາແຕ່ລະປະເພດ**

ການອອກວີຊາແຕ່ລະປະເພດ ໃຫ້ປະຕິບັດ ດັ່ງນີ້:

1. ວີຊາການທູດ ອອກໃຫ້ນັກການທູດ ແຕ່ຊັ້ນອະນຸເລຂາຂຶ້ນໄປ, ລັດຖະກອນກົງສຸນ, ຜູ້ຕາງໜ້າ ແລະ ຮອງຜູ້ຕາງໜ້າຂອງອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນ ພ້ອມດ້ວຍສະມາຊິກຄອບຄົວ ທີ່ຖືກແຕ່ງຕັ້ງໃຫ້ມາປະຕິບັດໜ້າທີ່ ທັງໄລຍະສັ້ນ ແລະ ໄລຍະຍາວ ຢູ່ ສປປ ລາວ ໂດຍມີໜັງສືສະເໜີຈາກອົງການທີ່ກ່ຽວຂ້ອງ;

2. ວີຊາລັດຖະການ ອອກໃຫ້ພະນັກງານບໍລິຫານ-ເຕັກນິກ ປະຈຳສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແລະ ສະຖານກົງສຸນພ້ອມດ້ວຍສະມາຊິກຄອບຄົວ;

3. ວີຊາ ຜົວ ຫຼື ເມັຍ ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈົດທະບຽນແຕ່ງດອງກັບພົນລະເມືອງລາວຢ່າງຖືກຕ້ອງ ຕາມກົດໝາຍ;

4. ວີຊາອັດທະຍາໄສ ອອກໃຫ້:

- ພະນັກງານຫ້ອງການຮ່ວມມື ໃນຂອບການພົວພັນສອງຝ່າຍ, ພະນັກງານອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນ ປະຈຳຫ້ອງການສຳນັກງານຜູ້ຕາງໜ້າຂອງອົງການຈັດຕັ້ງດັ່ງກ່າວ ຢູ່ ສປປ ລາວ;

- ຜູ້ຊ່ຽວຊານ ຫຼື ນັກວິຊາການຕ່າງປະເທດ ທີ່ມາໃນນາມໂຄງການ ການຮ່ວມມື ລະຫວ່າງ ສອງລັດຖະບານ;

- ຜູ້ຊ່ຽວຊານ ຫຼື ນັກວິຊາການຕ່າງປະເທດ ຂອງອົງການອາສາສະໝັກຂອງຕ່າງປະເທດ ທີ່ມາຕາມໂຄງການຊ່ວຍເຫຼືອລ້າ ແກ່ລັດຖະບານ ສປປ ລາວ;

- ຜູ້ຊ່ຽວຊານທີ່ເຂົ້າມາເພື່ອເກັບກຳຂໍ້ມູນ ກ່ຽວກັບການໃຫ້ກູ້ເງິນ ແລະ ຕິດຕາມ ໂຄງການຕາມສັນຍາກູ້ເງິນແກ່ລັດຖະບານ ສປປ ລາວ;

- ຜູ້ຊ່ຽວຊານຕ່າງປະເທດ ທີ່ຖືກເຊື້ອເຊີນເຂົ້າມາຈັດສຳມະນາ, ຝຶກອົບຮົມ ຫຼື ປາຖະກະຖາ;

- ພະນັກງານຮັບໃຊ້ຢູ່ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ ແລະ ເຮືອນພັກສ່ວນຕົວຂອງນັກການທູດ ທີ່ບໍ່ແມ່ນຄົນສັນຊາດລາວ ຫຼື ບໍ່ມີທີ່ຢູ່ຖາວອນ ຢູ່ ສປປ ລາວ;

- ບຸກຄົນສຳຄັນ ທີ່ຢູ່ໃນແຜນການເຄື່ອນໄຫວ ເພື່ອໃຫ້ການຊ່ວຍເຫຼືອ ແລະ ບຸກຄົນກິດຕິມະສັກ;

- ສະມາຊິກຄອບຄົວຂອງບຸກຄົນຕາມທີ່ໄດ້ກຳນົດໄວ້ໃນຂໍ້ 4 ຂອງມາດຕານີ້.

5. ວີຊາທ່ອງທ່ຽວ ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງເຂົ້າມາທ່ອງທ່ຽວ ຢູ່ ສປປ ລາວ;

6. ວີຊາໄລຍະສັ້ນ ອອກໃຫ້:

- ນັກວິຊາການຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ໃຫ້ເຂົ້າມາປະຊຸມ, ຝຶກອົບຮົມ ຫຼື ມາທັດສະນະສຶກສາຊົ່ວຄາວ ຢູ່ ສປປ ລາວ;

- ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງເຂົ້າມາຢ້ຽມຢາມ ພໍ່, ແມ່, ພີ່ນ້ອງ, ໝູ່ເພື່ອນ, ເກັບກຳຂໍ້ມູນການລົງທຶນ, ພົວພັນການຄ້າ ແລະ ຈຸດປະສົງອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ.

7. ວີຊາໄລຍະຍາວ ອອກໃຫ້:

- ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຄຸນງາມຄວາມດີຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ລວມທັງຜູ້ທີ່ມີຜົນປະໂຫຍດຕໍ່ ສປປ ລາວ ຊຶ່ງມີຈຸດປະສົງເດີນທາງເຂົ້າມາພັກເຊົາຍາວນານ ຢູ່ ສປປ ລາວ;

- ຄົນຕ່າງປະເທດ, ຄົນບໍ່ມີສັນຊາດທົ່ວໄປ ຊຶ່ງມີຈຸດປະສົງເດີນທາງເຂົ້າມາພັກເຊົາຍາວນານ ຢູ່ ສປປ ລາວ ຕ້ອງມີເງິນຢູ່ໃນບັນຊີຂອງທະນາຄານໃດໜຶ່ງ ຢູ່ ສປປ ລາວ ຢ່າງໜ້ອຍ ຊາວພັນໂດລາສະຫະລັດ ສຳລັບຜູ້ທີ່ຈະພັກເຊົາ ຢູ່ ສປປ ລາວ ພາຍໃນຫົກເດືອນ ແລະ ສີ່ສິບພັນໂດລາສະຫະລັດ ສຳລັບຜູ້ທີ່ຈະພັກເຊົາ ຢູ່ ສປປ ລາວ ພາຍໃນກຳນົດ ໜຶ່ງປີ.

8. ວິຊາຖາວອນ ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດ ໃຫ້ມາດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ;

9. ວິຊາຊ່ຽວຊານ ອອກໃຫ້:

- ຜູ້ຊ່ຽວຊານ ແລະ ພະນັກງານ ຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ (NGOs) ທີ່ໄດ້ຮັບອະນຸຍາດເຂົ້າມາເຄື່ອນໄຫວວຽກງານ ຢູ່ ສປປ ລາວ;

- ຜູ້ຊ່ຽວຊານ ແລະ ນັກວິຊາການ ທີ່ມາຕາມສັນຍາຈ້າງ ຫຼື ສັນຍາຮັບເໝົາກິດຈະການ ຈາກພາກລັດ, ເອກະຊົນ ຫຼື ອົງການຈັດຕັ້ງສາກົນອື່ນ ພ້ອມດ້ວຍສະມາຊິກຄອບຄົວ.

10. ວິຊາຜ່ານ ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຈຸດປະສົງເດີນທາງຜ່ານ ສປປ ລາວ ເພື່ອເດີນທາງໄປປະເທດອື່ນ;

11. ວິຊາທຸລະກິດ ອອກໃຫ້ ນັກທຸລະກິດຕ່າງປະເທດ ພ້ອມດ້ວຍສະມາຊິກຄອບຄົວ ທີ່ມາລົງທຶນ ຫຼື ມາເກັບກຳຂໍ້ມູນທາງດ້ານທຸລະກິດ ຢູ່ ສປປ ລາວ;

12. ວິຊານັກສຶກສາ ອອກໃຫ້ນັກສຶກສາ ທີ່ເຂົ້າມາສຶກສາ, ຄົ້ນຄວ້າ, ເກັບກຳຂໍ້ມູນ ຫຼື ມາຝຶກຫັດທາງດ້ານວິຊາການໃດໜຶ່ງ ຢູ່ ສປປ ລາວ;

13. ວິຊານັກຂ່າວ ອອກໃຫ້ນັກຂ່າວຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວເກັບກຳຂ່າວ ຢູ່ ສປປ ລາວ;

14. ວິຊາແຮງງານ ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມາອອກແຮງງານ ຢູ່ ສປປ ລາວ ພ້ອມດ້ວຍສະມາຊິກຄອບຄົວ.

**ມາດຕາ 21 ຜູ້ທີ່ຈະໄດ້ຮັບວິຊາເຂົ້າ-ອອກ ສປປ ລາວ ຫຼາຍເທື່ອ**

ຜູ້ທີ່ຈະໄດ້ຮັບວິຊາ ເຂົ້າ-ອອກ ສປປ ລາວ ຫຼາຍເທື່ອ ມີ ດັ່ງນີ້:

1. ນັກການທູດ ທີ່ຖືກແຕ່ງຕັ້ງໃຫ້ມາປະຈຳ ສປປ ລາວ;

2. ນັກການທູດ ທີ່ຖືກແຕ່ງຕັ້ງໃຫ້ມາປະຈຳ ສປປ ລາວ ແຕ່ມີສະຖານເອກອັກຄະລັດຖະທູດ ຕັ້ງຢູ່ປະເທດອື່ນ;

3. ຜູ້ທີ່ເຂົ້າມາປະຕິບັດໜ້າທີ່ຢູ່ ສປປ ລາວ ໄລຍະສັ້ນບໍ່ເກີນ ຫົກສິບວັນ;

4. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ເຂົ້າມາປະຕິບັດໜ້າທີ່ຢູ່ ສປປ ລາວ ໄລຍະແຕ່ ຫົກສິບເອັດວັນ ຂຶ້ນໄປ ທີ່ໄດ້ຮັບການຂຶ້ນທະບຽນ ຫຼື ໄດ້ຮັບບັດປະຈຳຕົວ ຫຼື ໄດ້ຮັບບັດອະນຸຍາດພັກເຊົາ;

5. ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຜູ້ທີ່ມີຄຸນງາມຄວາມດີຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ລວມທັງຜູ້ລົງທຶນ ແລະ ຜູ້ພັດທະນາ ຫຼື ຜູ້ມາພົວພັນທຸລະກິດ ແຕ່ບໍ່ໄດ້ປະຈຳ ຢູ່ ສປປ ລາວ.

ວີຊາເຂົ້າ-ອອກ ສປປ ລາວ ຫຼາຍເທື່ອ ມີກຳນົດເວລາເທົ່າກັບອາຍຸຂອງການຂຶ້ນທະບຽນ ຫຼື ບັດອະນຸຍາດພັກເຊົາ ຫຼື ບັດປະຈຳຕົວ ຍົກເວັ້ນວີຊາເຂົ້າ-ອອກ ຫຼາຍເທື່ອ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 3 ແລະ ຂໍ້ 5 ຂອງມາດຕານີ້ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 22 ຂອບເຂດສິດໃນການອອກວີຊາ

ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ ແລະ ຫ້ອງການກົງສຸນ ຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ສາມາດອອກວີຊາທ່ອງທ່ຽວ, ວີຊາໄລຍະສັ້ນ ແລະ ວີຊາຜ່ານ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີເງື່ອນໄຂຄົບຖ້ວນເຂົ້າ-ອອກ ສປປ ລາວ ບໍ່ໃຫ້ເກີນສອງຄັ້ງ, ສ່ວນການອອກວີຊາປະເພດອື່ນ ລວມທັງການອອກວີຊາເຂົ້າ-ອອກ ສປປ ລາວ ຫຼາຍເທື່ອນັ້ນ ຕ້ອງໄດ້ຮັບການເຫັນດີຈາກກະຊວງການຕ່າງປະເທດເສຍກ່ອນ.

ໜ່ວຍງານວີຊາກັບດ່ານສາກົນ ໃນຂອບເຂດທົ່ວປະເທດ ສາມາດອອກວີຊາທ່ອງທ່ຽວ, ວີຊາໄລຍະສັ້ນ ແລະ ວີຊາຜ່ານ ໃຫ້ແກ່ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີເງື່ອນໄຂຄົບຖ້ວນ ເຂົ້າ-ອອກ ສປປ ລາວ ໄດ້ໜຶ່ງຄັ້ງ, ສ່ວນການອອກວີຊາປະເພດອື່ນ ຕ້ອງໄດ້ຮັບການເຫັນດີຈາກ ກະຊວງການຕ່າງປະເທດ ເສຍກ່ອນ.

ໃນກໍລະນີ ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ ແລະ ຫ້ອງການກົງສຸນ ຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ຫາກບໍ່ຮູ້ສະພາບການເຄື່ອນໄຫວຂອງບຸກຄົນ ທີ່ຂໍວີຊາທ່ອງທ່ຽວ, ວີຊາໄລຍະສັ້ນ ແລະ ວີຊາຜ່ານ ຕ້ອງໄດ້ຂໍຄຳເຫັນຈາກກະຊວງການຕ່າງປະເທດ ເສຍກ່ອນ, ສ່ວນໜ່ວຍງານວີຊາກັບດ່ານສາກົນ ຕ້ອງໄດ້ຂໍຄຳເຫັນຈາກກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ.

## ໝວດທີ 5
## ເອກະສານເດີນທາງ

### ມາດຕາ 23 ປະເພດເອກະສານເດີນທາງ

ເອກະສານເດີນທາງ ມີ ໜັງສືຜ່ານແດນ, ປຶ້ມຜ່ານແດນ, ໃບຜ່ານແດນ ແລະ ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້.

**ໜັງສືຜ່ານແດນ** ( Passport ) ແມ່ນ ເອກະສານເດີນທາງລະຫວ່າງປະເທດ ຊຶ່ງອອກໃຫ້ໂດຍ ອົງການທີ່ກ່ຽວຂ້ອງຂອງປະເທດໃດໜຶ່ງ.

**ປຶ້ມຜ່ານແດນ** ( Border pass ) ແມ່ນ ເອກະສານປະເພດໜຶ່ງ ຊຶ່ງອົງການ ທີ່ກ່ຽວຂ້ອງອອກໃຫ້ ພົນລະເມືອງຂອງຕົນ ເພື່ອໃຊ້ເດີນທາງເຂົ້າ-ອອກຕາມດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະ

ເພນີໄປຍັງແຂວງທີ່ມີຊາຍແດນຕິດຈອດຂອງສອງປະເທດ ໂດຍມີຂອບເຂດຈຳກັດຕາມສັນຍາສອງຝ່າຍ ແລະ ສາມາດໃຊ້ໄດ້ຫຼາຍຄັ້ງ.

**ໃບຜ່ານແດນ** (Temporary Border Pass) ແມ່ນ ເອກະສານປະເພດໜຶ່ງ ຊຶ່ງອົງການທີ່ກ່ຽວຂ້ອງອອກໃຫ້ພົນລະເມືອງຂອງຕົນ ເພື່ອໃຊ້ເດີນທາງເຂົ້າ-ອອກ ຕາມດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີໄປຍັງແຂວງ ທີ່ມີຊາຍແດນຕິດຈອດຂອງສອງປະເທດ ໂດຍມີຂອບເຂດຈຳກັດຕາມສັນຍາສອງຝ່າຍ ແລະ ສາມາດໃຊ້ໄດ້ຄັ້ງດຽວ.

**ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້** ແມ່ນ ເອກະສານປະເພດໜຶ່ງ ທີ່ໃຊ້ແທນໜັງສືຜ່ານແດນ ຊຶ່ງອອກໃຫ້ໂດຍອົງການທີ່ກ່ຽວຂ້ອງຂອງປະເທດ ຫຼື ອົງການຈັດຕັ້ງສາກົນໃດໜຶ່ງ ທີ່ ສປປ ລາວ ຮັບຮູ້ ເປັນຕົ້ນ ເອກະສານເດີນທາງສຳລັບຄົນບໍ່ມີສັນຊາດ ( Travel Document), ໃບເດີນທາງ (Laissez-passer), ໜັງສືຜ່ານແດນຊົ່ວຄາວ (Temporary Passport) ແລະ ໜັງສືຢັ້ງຢືນສະຖານະພາບບຸກຄົນ (Certificate of Identity).

### ມາດຕາ 24 ຂອບເຂດສິດຂອງຜູ້ອອກເອກະສານເດີນທາງ

ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ອອກປຶ້ມຜ່ານແດນ ແລະ ໃບຜ່ານແດນ.

ກະຊວງການຕ່າງປະເທດ ເປັນຜູ້ອອກ ໜັງສືຜ່ານແດນ ແລະ ເອກະສານເດີນທາງອື່ນທີ່ໃຊ້ແທນໄດ້.

### ມາດຕາ 25 ກຳນົດເວລາໃນການພິຈາລະນາອອກເອກະສານເດີນທາງ

ການພິຈາລະນາອອກເອກະສານເດີນທາງ ໃຫ້ປະຕິບັດຕາມກຳນົດເວລາ ດັ່ງນີ້:

1. ໜັງສືຜ່ານແດນການທູດ ແລະ ໜັງສືຜ່ານແດນລັດຖະການ ຫ້າວັນ ລັດຖະການ;
2. ໜັງສືຜ່ານແດນທຳມະດາ ເຈັດວັນ ລັດຖະການ;
3. ປຶ້ມຜ່ານແດນ ສອງວັນ ລັດຖະການ;
4. ໃບຜ່ານແດນ ໜຶ່ງວັນ ລັດຖະການ.

ສຳລັບກຳນົດເວລາໃນການພິຈາລະນາອອກເອກະສານເດີນທາງອື່ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ III
## ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ
## ໝວດທີ 1
## ການກຳນົດເວລາພັກເຊົາ ແລະ ການພັກເຊົາ

**ມາດຕາ 26 ການກຳນົດເວລາພັກເຊົາ**

ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງປະຈຳດ່ານ ເປັນຜູ້ກຳນົດເວລາການພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕາມແຕ່ລະປະເພດວີຊາ ຫຼື ຕາມສັນຍາສອງຝ່າຍ ຫຼື ການຕົກລົງຂອງລັດຖະບານ.

**ມາດຕາ 27 ການຕໍ່ເວລາພັກເຊົາ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດໃຫ້ພັກເຊົາ ຢູ່ ສປປ ລາວ ແລ້ວ ຫາກມີຈຸດປະສົງຢູ່ຕື່ມ ຕ້ອງໄດ້ສະເໜີຂໍຕໍ່ກຳນົດໄລຍະເວລາພັກເຊົານຳເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງທີ່ກ່ຽວຂ້ອງກ່ອນໝົດກຳນົດ.

ການຕໍ່ເວລາພັກເຊົາແຕ່ລະຄັ້ງ ສຳລັບວີຊາແຕ່ລະປະເພດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 28 ການພັກເຊົາ**

ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ເຂົ້າມາ ຢ້ຽມຢາມ ຫຼື ທ່ອງທ່ຽວ, ມາເຮັດວຽກ, ເຄື່ອນໄຫວປະຕິບັດໜ້າທີ່ໃດໜຶ່ງ ໂດຍມີກຳນົດເວລາ ແລະ ດຳລົງຊີວິດ ຢູ່ ສປປ ລາວ ສາມາດພັກເຊົາຕາມການອະນຸຍາດຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງກະຊວງປ້ອງກັນຄວາມສະຫງົບ.

**ມາດຕາ 29 ສະຖານທີ່ພັກເຊົາ**

ສະຖານທີ່ພັກເຊົາ ແມ່ນ ເຮືອນພັກ, ໂຮງແຮມ, ເຮືອນເຊົ່າ ແລະ ສະຖານທີ່ພັກແຮມ.

**ມາດຕາ 30 ການແຈ້ງພັກເຊົາ**

ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕ້ອງແຈ້ງເອກະສານເດີນທາງ ທີ່ໄດ້ແຈ້ງເຂົ້າ ສປປ ລາວ ຫຼື ບັດອະນຸຍາດພັກເຊົາ ຕໍ່ຜູ້ຮັບຜິດຊອບສະຖານທີ່ພັກເຊົາ ເພື່ອລົງທະບຽນໃຫ້ຖືກຕ້ອງ ຕາມລະບຽບການ.

**ມາດຕາ 31 ພັນທະຂອງຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດພັກເຊົາ ຢູ່ ສປປ ລາວ**

ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ໄດ້ຮັບອະນຸຍາດພັກເຊົາ ຢູ່ ສປປ ລາວ ມີ ພັນທະ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດຕາມ ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ, ຮີດຄອງປະເພນີອັນດີງາມຂອງຊາດລາວ;

2. ຮ່ວມມື ແລະ ປະກອບສ່ວນ ໃນການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

3. ພັກເຊົາຕາມສະຖານທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້ ເພື່ອຮັບປະກັນຄວາມປອດໄພ;

4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 32 ຄວາມຮັບຜິດຊອບຂອງຜູ້ປະກອບການ**

ຜູ້ປະກອບການ ມີ ຄວາມຮັບຜິດຊອບ ດັ່ງນີ້:

1. ບັນທຶກ, ສຳເນົາເອກະສານເດີນທາງ ຂອງຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ເຂົ້າມາພັກເຊົາ ໃນເຄຫະສະຖານທີ່ຕົນຮັບຜິດຊອບ ແລ້ວແຈ້ງໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ພາຍໃນ ຊາວສີ່ຊົ່ວໂມງ;

2. ບັນທຶກ ແລະ ແຈ້ງ ກ່ຽວກັບການໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເຊົ່າພາຫະນະໃຫ້ເຈົ້າໜ້າທີ່ຕຳຫຼວດທ່ອງທ່ຽວ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;

3. ລາຍງານ, ໃຫ້ການຮ່ວມມື, ອຳນວຍຄວາມສະດວກ ໃຫ້ເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງໃນເວລາຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

4. ຈັດສະຖານທີ່ພັກເຊົາ, ຂຶ້ນບັນຊີ ແລະ ລາຍງານ ກ່ຽວກັບແຮງງານຕ່າງປະເທດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃຫ້ເຈົ້າໜ້າທີ່ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

# ໝວດທີ 2
## ການຂຶ້ນທະບຽນ, ການອອກບັດອະນຸຍາດພັກເຊົາ ແລະ ບັດປະຈຳຕົວ ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ

### ມາດຕາ 33 ການຂຶ້ນທະບຽນພັກເຊົາ

ເຈົ້າໜ້າທີ່ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ເປັນຜູ້ຂຶ້ນທະບຽນພັກເຊົາໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມາປະຕິບັດໜ້າທີ່ ຢູ່ ສປປ ລາວ ດ້ວຍການປະທັບຕາຂຶ້ນທະບຽນພັກເຊົາລົງໃສ່ໃນໜ້າເຈັ້ຍເອກະສານເດີນທາງ ທີ່ກຳນົດໄລຍະພັກເຊົາໃຫ້ເທື່ອລະ ເກົ້າສິບວັນ.

### ມາດຕາ 34 ການອອກບັດອະນຸຍາດພັກເຊົາ

ເຈົ້າໜ້າທີ່ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ເປັນຜູ້ອອກບັດອະນຸຍາດພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມາປະຕິບັດໜ້າທີ່ ຢູ່ ສປປ ລາວ ແລະ ບຸກຄົນທີ່ຈົດທະບຽນແຕ່ງດອງກັບພົນລະເມືອງລາວຢ່າງຖືກຕ້ອງຕາມກົດໝາຍ.

ສຳລັບ ຜູ້ລົງທຶນ, ຜູ້ພັດທະນາ ທີ່ດຳເນີນໂຄງການ ຫຼື ສຳປະທານ ກັບລັດຖະບານ ແຫ່ງ ສປປ ລາວ ຈະໄດ້ ຮັບບັດອະນຸຍາດພັກເຊົາ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ສາມາດຕໍ່ໄດ້.

### ມາດຕາ 35 ເງື່ອນໄຂ ການຂຶ້ນທະບຽນ ແລະ ການອອກບັດອະນຸຍາດ ພັກເຊົາ

ເຈົ້າໜ້າທີ່ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ສາມາດຂຶ້ນທະບຽນ ແລະ ອອກບັດອະນຸຍາດ ພັກເຊົາ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມາປະຕິບັດໜ້າທີ່ຢູ່ ສປປ ລາວ ຕາມເງື່ອນໄຂ ດັ່ງນີ້:

1. ມີໜັງສືຜ່ານແດນ ທີ່ມີອາຍຸນຳໃຊ້ໄດ້ແຕ່ຫົກເດືອນຂຶ້ນໄປ;

2.ມີວີຊາຜົວ ຫຼື ເມຍ (SP-$B_3$);

3. ມີວີຊາ ລັດຖະການ(S-$A_2$), ວີຊາອັດທະຍາໄສ (C-$B_1$), ວີຊາໄລຍະຍາວ (I-B3), ວີຊານັກສຶກສາ(ST-$B_2$), ວີຊານັກຂ່າວ(M-$B_2$), ວີຊາຊ່ຽວຊານ(E-$B_2$), ວີຊາທຸລະກິດ(NI-$B_2$) ແລະ ວີຊາແຮງງານ(LA-$B_2$);

4. ມີໜັງສືສະເໜີຈາກອົງການທີ່ກ່ຽວຂ້ອງ ຫຼື ບໍລິສັດທີ່ໄດ້ຮັບອະນຸຍາດລົງທຶນພາຍໃນ, ຕ່າງປະເທດ ຫຼື ໄດ້ຮັບອະນຸຍາດສຳປະທານຈາກລັດຖະບານ ຂອງ ສປປ ລາວ;

5. ມີວີຊາອື່ນ ຕາມການຕົກລົງຂອງລັດຖະບານ ຫຼື ບໍ່ມີວີຊາ ຕາມສັນຍາສອງຝ່າຍ.

### ມາດຕາ 36 ການລຶບລ້າງການຂຶ້ນທະບຽນ ແລະ ບັດອະນຸຍາດພັກເຊົາ

ການຂຶ້ນທະບຽນ ແລະ ບັດອະນຸຍາດພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຈະຖືກລຶບລ້າງ ໃນກໍລະນີທີ່ພວກກ່ຽວ ຫາກມີການເຄື່ອນໄຫວທີ່ລະເມີດກົດໝາຍ ແລະ ລະບຽບການ ຫຼື ມີການເຄື່ອນໄຫວທີ່ບໍ່ຖືກຕ້ອງຕາມເປົ້າໝາຍກໍານົດໄວ້.

### ມາດຕາ 37 ການສົ່ງຄືນບັດອະນຸຍາດພັກເຊົາ

ເມື່ອຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຫາກສິ້ນສຸດການປະຕິບັດໜ້າທີ່ຂອງຕົນ ຢູ່ ສປປ ລາວ ແລ້ວ ອົງການ, ໂຄງການ, ບໍລິສັດ ແລະ ຂະແໜງການຕ່າງໆທີ່ກ່ຽວຂ້ອງ ຕ້ອງແຈ້ງ ແລະ ສົ່ງບັດອະນຸຍາດພັກເຊົາ ຄືນໃຫ້ກົມຕໍາຫຼວດຄຸ້ມຄອງຄົນຕ່າງປະເທດ ຫຼື ກອງບັນຊາການ ປກສ ແຂວງ, ນະຄອນ ຫຼື ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານ.

### ມາດຕາ 38 ການອອກໃບຢັ້ງຢືນ

ຂະແໜງການປ້ອງກັນຄວາມສະຫງົບ ເປັນຜູ້ອອກໜັງສືຢັ້ງຢືນຕາມແຕ່ລະກໍລະນີ ກ່ຽວກັບການເຂົ້າ-ອອກ ແລະ ການປະຕິບັດໜ້າທີ່ ຢູ່ ສປປ ລາວ ແລະ ຮັບແຈ້ງການເສັຍຫາຍເອກະສານເດີນທາງ, ບັດອະນຸຍາດພັກເຊົາ ແລະ ວັດຖຸສິ່ງຂອງຕ່າງໆ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ.

### ມາດຕາ 39 ການອອກບັດປະຈໍາຕົວ

ກະຊວງການຕ່າງປະເທດ ເປັນຜູ້ອອກບັດປະຈໍາຕົວ ໃຫ້ບຸກຄົນ ດັ່ງນີ້:

1. ນັກການທູດ, ລັດຖະກອນກົງສຸນ, ຫົວໜ້າ ແລະ ຮອງຫົວໜ້າ ຜູ້ຕາງໜ້າອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນອື່ນ, ຜູ້ມີອະພິສິດ ແລະ ສິດຄຸ້ມກັນ ທີ່ມີຖານະທຽບເທົ່ານັກການທູດ ພ້ອມດ້ວຍສະມາຊິກຄອບຄົວ;

2. ພະນັກງານບໍລິຫານ-ເຕັກນິກ ປະຈໍາສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ ແລະ ຫ້ອງການກົງສຸນ, ພະນັກງານປະຈໍາຫ້ອງການຮ່ວມມືໃນຂອບການພົວພັນສອງຝ່າຍ, ພະນັກງານອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນ ປະຈໍາຫ້ອງການສໍານັກງານຜູ້ຕາງໜ້າຂອງຕົນຢູ່ ສປປ ລາວ, ພະນັກງານຮັບໃຊ້ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ, ຫ້ອງການກົງສຸນ ແລະ ສະຖານທີ່ພັກສ່ວນຕົວຂອງນັກການທູດ ທີ່ບໍ່ແມ່ນພົນລະເມືອງລາວ ຫຼື ບໍ່ມີທີ່ຢູ່ຖາວອນ ຢູ່ ສປປ ລາວ ພ້ອມດ້ວຍສະມາຊິກຄອບຄົວ.

ບຸກຄົນ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1 ແລະ 2 ຂອງມາດຕານີ້ ຊຶ່ງເຂົ້າມາປະຕິບັດໜ້າທີ່ ຢູ່ ສປປ ລາວ ແຕ່ ຫົກສິບວັນ ຫາ ສາມຮ້ອຍຫົກສິບຫ້າວັນ ກະຊວງການຕ່າງປະເທດ ຈະບໍ່ໄດ້ອອກບັດປະຈໍາຕົວໃຫ້. ສໍາລັບບັດປະຈໍາຕົວທີ່ອອກໃຫ້ນັ້ນ ມີກໍານົດໃຊ້ໄດ້ຕະຫຼອດໄລຍະເວລາປະຕິບັດໜ້າທີ່ຢູ່ ສປປ ລາວ.

ພາຍຫຼັງສິ້ນສຸດການປະຕິບັດໜ້າທີ່ ຢູ່ ສປປ ລາວ ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ, ຫ້ອງການກົງສຸນ, ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ ຕ້ອງແຈ້ງ ແລະ ສົ່ງບັດປະຈໍາຕົວຂອງຜູ້ກ່ຽວຄືນໃຫ້ກະຊວງການຕ່າງປະເທດ.

ສໍາລັບ ການປະກອບເອກະສານຂໍບັດປະຈໍາຕົວ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ IV
## ການຈັດຕັ້ງປະຕິບັດວຽກງານ
## ເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ
### ໝວດທີ 1
### ການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ

**ມາດຕາ 40 ອົງການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ**

ອົງການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ມີ ດັ່ງນີ້:

- ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຂອງກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ;
- ພະແນກຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ;
- ໜ່ວຍງານຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຂອງກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ;
- ເຈົ້າໜ້າທີ່ຕໍາຫຼວດກວດຄົນເຂົ້າ-ອອກເມືອງ ປະຈໍາດ່ານ.

**ມາດຕາ 41 ສິດ ແລະ ໜ້າທີ່ ຂອງກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງ ຂອງກົມໃຫຍ່ສັນຕິບານກະຊວງປ້ອງກັນຄວາມສະຫງົບ**

ກົມຕໍາຫຼວດກວດຄົນເຂົ້າ-ອອກເມືອງຂອງກົມໃຫຍ່ສັນຕິບານກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ວາງແຜນການ, ກໍາແໜ້ນສະພາບການຮອບດ້ານ ວຽກງານເຂົ້າ-ອອກ ສປປ ລາວ ໃນຂອບເຂດທົ່ວປະເທດ;
2. ຄຸ້ມຄອງ, ຊີ້ນໍາ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນ ວຽກງານເຂົ້າ-ອອກ ສປປ ລາວ ແລະ ບັນດາດ່ານ ໃນຂອບເຂດທົ່ວປະເທດ ເພື່ອເຮັດໃຫ້ການເຂົ້າ-ອອກ ສປປ ລາວ ມີຄວາມສະດວກ, ວ່ອງໄວ, ຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ;

3. ໃຫ້ຢຸດ ຫຼື ໂຈະ ການເດີນທາງຂອງພາຫະນະ, ບຸກຄົນ, ກຸ່ມຄົນ ເມື່ອເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ຫາກມີຂໍ້ມູນຫຼັກຖານກ່ຽວກັບການລະເມີດກົດໝາຍຂອງ ບຸກຄົນ, ກຸ່ມຄົນ ລວມທັງ ຄວາມເປັນອັນຕະລາຍຂອງ ວັດຖຸປະກອນ ແລະ ສິ່ງຂອງຕ່າງໆ;

4. ຊີ້ນຳການອອກປຶ້ມຜ່ານແດນໃຫ້ພົນລະເມືອງລາວ ທີ່ມີຈຸດປະສົງເດີນທາງເຂົ້າ-ອອກ ຕາມດ່ານສາກົນ ໃນຂອບເຂດທົ່ວປະເທດ ທີ່ມີຊາຍແດນຕິດຈອດກັບ ສປປ ລາວ;

5. ອະນຸຍາດຕໍ່ເວລາພັກເຊົາໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ມາພັກເຊົາຢູ່ ສປປ ລາວ ບໍ່ເກີນເກົ້າສິບວັນ ຍົກເວັ້ນກໍລະນີທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ ລວມທັງຊີ້ນຳວຽກງານດັ່ງກ່າວຕໍ່ຂັ້ນລຸ່ມຂອງຕົນ;

6. ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

7. ນຳໃຊ້ ພາຫະນະ, ວັດຖຸປະກອນເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານເຂົ້າ-ອອກ ສປປ ລາວ ຕາມລະບຽບການ ເມື່ອມີຄວາມຈຳເປັນ;

8. ປະສານສົມທົບ ກັບຂະແໜງການອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ;

9. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 42 ສິດ ແລະ ໜ້າທີ່ ຂອງພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ**

ພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນ ວຽກງານເຂົ້າ-ອອກ ສປປ ລາວ ແລະ ບັນດາດ່ານ ຢູ່ໃນແຂວງ, ນະຄອນ;

2. ກວດກາເອກະສານຂໍ ອອກ ຫຼື ຕໍ່ປຶ້ມຜ່ານແດນ, ໃບຜ່ານແດນ ໃຫ້ພົນລະເມືອງລາວ, ການຂໍຕໍ່ອະນຸຍາດພັກເຊົາຂອງຄົນຕ່າງປະເທດ ທີ່ນຳໃຊ້ປຶ້ມຜ່ານແດນ, ໃບຜ່ານແດນ ເພື່ອສະເໜີຂັ້ນເທິງພິຈາລະນາ;

3. ກວດກາເອກະສານຂໍຕໍ່ເວລາພັກເຊົາ ຂອງຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ນຳໃຊ້ໜັງສືຜ່ານແດນ ແລະ ໄດ້ຮັບວີຊາ ເຂົ້າມາພັກເຊົາຢູ່ພາຍໃນແຂວງ, ນະຄອນ ຂອງຕົນ ເພື່ອສະເໜີຂັ້ນເທິງພິຈາລະນາ;

4. ປະສານສົມທົບກັບພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການພັກເຊົາ ແລະ ການເຄື່ອນໄຫວຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

5. ຂຶ້ນບັນຊີ ແລະ ຄຸ້ມຄອງສະຖິຕິ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

6. ສະເໜີຂັ້ນເທິງໃຫ້ຢຸດ ຫຼື ໂຈະ ການເດີນທາງຂອງພາຫະນະ, ບຸກຄົນ, ກຸ່ມຄົນ ເມື່ອເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ຫາກມີຂໍ້ມູນຫຼັກຖານກ່ຽວກັບການລະເມີດກົດໝາຍຂອງບຸກຄົນ, ກຸ່ມຄົນ ລວມທັງຄວາມເປັນອັນຕະລາຍຂອງ ວັດຖຸປະກອນ ແລະ ສິ່ງຂອງຕ່າງໆ;

7. ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

8. ນຳໃຊ້ ພາຫະນະ, ວັດຖຸປະກອນເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານເຂົ້າ-ອອກ ສປປ ລາວ ຕາມລະບຽບການ ເມື່ອມີຄວາມຈຳເປັນ;

9. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ;

10. ພົວພັນ, ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 43 ສິດ ແລະ ໜ້າທີ່ ຂອງໜ່ວຍງານຕຳຫຼວດກວດຄົນເຂົ້າ-ອອກເມືອງຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ**

ໜ່ວຍງານຕຳຫຼວດກວດຄົນເຂົ້າ-ອອກເມືອງ ຂອງກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນວຽກງານເຂົ້າ-ອອກ ສປປ ລາວ ແລະ ດ່ານປະເພນີ ຢູ່ໃນເມືອງ, ເທດສະບານ;

2. ປະສານສົມທົບກັບພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການພັກເຊົາ ແລະ ການເຄື່ອນໄຫວຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

3. ກວດກາເອກະສານຂໍອອກໃບຜ່ານແດນ ຂອງພົນລະເມືອງລາວ ຢູ່ເມືອງທີ່ມີຊາຍແດນຕິດຈອດ ເພື່ອສະເໜີຂັ້ນເທິງພິຈາລະນາ;

4. ຂຶ້ນບັນຊີ ແລະ ຄຸ້ມຄອງສະຖິຕິ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

5. ສະເໜີຂັ້ນເທິງໃຫ້ຢຸດ ຫຼື ໂຈະ ການເດີນທາງຂອງພາຫະນະ, ບຸກຄົນ, ກຸ່ມຄົນ ເມື່ອເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ຫາກມີຂໍ້ມູນຫຼັກຖານກ່ຽວກັບການລະເມີດກົດໝາຍຂອງບຸກຄົນ, ກຸ່ມຄົນ ລວມທັງຄວາມເປັນອັນຕະລາຍຂອງວັດຖຸປະກອນ ແລະ ສິ່ງຂອງຕ່າງໆ;

6. ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

7. ນຳໃຊ້ ພາຫະນະ, ວັດຖຸປະກອນເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານເຂົ້າ-ອອກ ສປປ ລາວ ຕາມລະບຽບການ ເມື່ອມີຄວາມຈຳເປັນ;

8. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 44 ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ**

ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ປະຈຳດ່ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ກວດກາເອກະສານເດີນທາງທຸກປະເພດຂອງຜູ້ໂດຍສານ, ຜູ້ໂດຍສານ ແລະ ພາຫະນະ ລວມທັງວັດຖຸສິ່ງຂອງທີ່ບໍ່ຢູ່ໃນລາຍການຂອງສິນຄ້າ;

2. ສະເໜີຂັ້ນເທິງໃຫ້ຢຸດ ຫຼື ໂຈະ ການເດີນທາງເຂົ້າ-ອອກ ສປປ ລາວ ຂອງ ບຸກຄົນ, ກຸ່ມຄົນ ທີ່ບໍ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9,12 ແລະ 13 ຂອງກົດໝາຍສະບັບນີ້;

3. ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

4. ນຳໃຊ້ ພາຫະນະ, ວັດຖຸປະກອນເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານເຂົ້າ-ອອກ ສປປ ລາວ ຕາມລະບຽບການ ເມື່ອມີຄວາມຈຳເປັນ;

5. ປະສານສົມທົບກັບເຈົ້າໜ້າທີ່ອື່ນປະຈຳດ່ານ ໃນການເຄື່ອນໄຫວວຽກງານເຂົ້າ-ອອກ ສປປ ລາວ;

6. ພົວພັນ ແລະ ຮ່ວມມືກັບດ່ານເຊື່ອງໜ້າ ກ່ຽວກັບວຽກງານເຂົ້າ-ອອກ ສປປ ລາວ ຕາມການມອບໝາຍຂອງຂັ້ນເທິງ;

7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ສປປ ລາວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

### ມາດຕາ 45 ອົງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

ອົງການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ມີ ດັ່ງນີ້:

- ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຂອງກົມໃຫຍ່ສັນຕິບານ ກະຊວງປ້ອງກັນຄວາມສະຫງົບ;
- ພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ;
- ໜ່ວຍງານຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ.

### ມາດຕາ 46 ສິດ ແລະ ໜ້າທີ່ຂອງກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຂອງກົມໃຫຍ່ສັນຕິບານກະຊວງປ້ອງກັນຄວາມສະຫງົບ

ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຂອງກົມໃຫຍ່ສັນຕິບານກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້າ ວາງແຜນການ, ກຳແໜ້ນສະພາບການຮອບດ້ານ ໃນວຽກງານຄຸ້ມຄອງຄົນຕ່າງປະເທດ;

2. ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດ ໃຫ້ມີຄວາມສະດວກ, ວ່ອງໄວ, ຮັບປະກັນຄວາມສະຫງົບ, ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດທົ່ວປະເທດ;

3. ປະສານສົມທົບກັບກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການພັກເຊົາ ແລະ ການເຄື່ອນໄຫວຂອງຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ໃນຂອບເຂດທົ່ວປະເທດ;

4. ຊີ້ນຳການຂຶ້ນບັນຊີ ແລະ ຄຸ້ມຄອງສະຖິຕິ ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ໃນຂອບເຂດທົ່ວປະເທດ;

5. ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

6. ນຳໃຊ້ ພາຫະນະ, ວັດຖຸປະກອນເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານຄຸ້ມຄອງຄົນຕ່າງປະເທດ ຕາມລະບຽບການ ເມື່ອມີຄວາມຈຳເປັນ;

7. ຂຶ້ນທະບຽນພັກເຊົາ, ຕໍ່ການຂຶ້ນທະບຽນພັກເຊົາ ແລະ ອອກບັດອະນຸຍາດພັກເຊົາໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕາມປະເພດວີຊາ ຂໍ້ 2, 3, 4, 7, 9, 11, 12, 13 ແລະ 14 ມາດຕາ 19 ຂອງກົດໝາຍສະບັບນີ້ ສຳລັບປະເພດວີຊາຂໍ້ 2 ນັ້ນ ຍັງຕ້ອງປະຕິບັດຕາມສັນຍາສອງຝ່າຍ ລວມທັງຊີ້ນຳວຽກງານດັ່ງກ່າວຕໍ່ຂັ້ນລຸ່ມຂອງຕົນ;

8. ລຶບລ້າງການຂຶ້ນທະບຽນ, ບັດອະນຸຍາດພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

9. ຄົ້ນຄວ້າ, ກວດກາ ເອກະສານຂໍອະນຸຍາດດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;

10. ຄົ້ນຄວ້າ, ກວດກາ ເອກະສານຂໍອະນຸຍາດແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

11. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງຄົນຕ່າງປະເທດ;

12. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງຄົນຕ່າງປະເທດ ຕາມການມອບໝາຍ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 47 ສິດ ແລະ ໜ້າທີ່ຂອງພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດຂອງກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ**

ພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດ ຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງ, ຊີ້ນຳ, ບັນຊາ, ຕິດຕາມ, ກວດກາ ແລະ ປະເມີນຜົນ ວຽກງານຄຸ້ມຄອງຄົນຕ່າງປະເທດ;

2. ຄົ້ນຄວ້າ ແລະ ສະເໜີ ການຂຶ້ນທະບຽນພັກເຊົາ, ຕໍ່ການຂຶ້ນທະບຽນພັກເຊົາ ແລະ ອອກບັດອະນຸຍາດພັກເຊົາ ລວມທັງສະເໜີການລົບລ້າງການຂຶ້ນທະບຽນ, ບັດອະນຸຍາດພັກເຊົາ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕໍ່ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ;

3. ປະສານສົມທົບກັບພະແນກຕຳຫຼວດກວດຄົນເຂົ້າ-ອອກເມືອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ການພັກເຊົາ ແລະ ການເຄື່ອນໄຫວຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

4. ຂຶ້ນບັນຊີ ແລະ ຄຸ້ມຄອງສະຖິຕິ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

5. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການຂໍອະນຸຍາດດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

6. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການຂໍອະນຸຍາດແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

7. ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;

8. ນຳໃຊ້ ພາຫະນະ, ວັດຖຸປະກອນເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານຄຸ້ມຄອງຄົນຕ່າງປະເທດ ເມື່ອມີຄວາມຈຳເປັນ;

9. ປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງກ່ຽວກັບວຽກງານຄຸ້ມຄອງຄົນຕ່າງປະເທດ;

10. ພົວພັນ, ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງຄົນຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ສິດ ແລະ ໜ້າທີ່ຂອງໜ່ວຍງານຕຳຫຼວດຄຸ້ມຄອງຄົນຕ່າງປະເທດຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ**

ໜ່ວຍງານຕຳຫຼວດຄຸ້ມຄອງຄົນຕ່າງປະເທດຂອງກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ຕາມຄວາມຮັບຜິດຊອບ ຂອງຕົນ ດັ່ງນີ້:

1. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ວຽກງານຄຸ້ມຄອງຄົນຕ່າງປະເທດ;
2. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການຂໍອະນຸຍາດດຳລົງຊີວິດ ຢູ່ ສປປ ລາວ ຢ່າງຖາວອນ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
3. ຄຸ້ມຄອງ, ຕິດຕາມ, ກວດກາ ການພັກເຊົາ ແລະ ການເຄື່ອນໄຫວຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;
4. ເກັບກຳຂໍ້ມູນ, ຂຶ້ນບັນຊີ ແລະ ຄຸ້ມຄອງສະຖິຕິ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;
5. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການຂໍອະນຸຍາດແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;
6. ເຜີຍແຜ່ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ, ສຶກສາອົບຮົມ, ກ່າວເຕືອນ, ປັບໃໝ, ກັກຕົວ ແລະ ດຳເນີນການສອບຖາມເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ຈາກບຸກຄົນທີ່ລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
7. ນຳໃຊ້ ພາຫະນະ, ວັດຖຸປະກອບເຕັກນິກຕ່າງໆ ແລະ ອາວຸດ ເຂົ້າໃນວຽກງານຄຸ້ມຄອງຄົນຕ່າງປະເທດ ຕາມລະບຽບການ ເມື່ອມີຄວາມຈຳເປັນ;
8. ປະສານສົມທົບກັບຫ້ອງການ ແລະ ອົງການອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານຄຸ້ມຄອງຄົນຕ່າງປະເທດ;
9. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄົນຕ່າງປະເທດ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ V
## ຄ່າທຳນຽມ, ຄ່າບໍລິການ ແລະ ງົບປະມານ

**ມາດຕາ 49 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການ ຊຶ່ງປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 50 ງົບປະມານ**

ລັດ ສະໜອງງົບປະມານ ໃຫ້ແກ່ວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ເພື່ອນຳໃຊ້ເຂົ້າໃນການກໍ່ສ້າງ, ປັບປຸງພື້ນຖານໂຄງລ່າງ, ພັດທະນາວຽກງານ ແລະ ກຳລັງວິຊາສະເພາະ ໃຫ້ເຂັ້ມແຂງຮອບດ້ານ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 51 ຂໍ້ຫ້າມສຳລັບເຈົ້າໜ້າທີ່ຕຳຫຼວດ ກວດຄົນເຂົ້າ-ອອກເມືອງ ແລະ ຄຸ້ມຄອງຄົນຕ່າງປະເທດ**

ຫ້າມ ເຈົ້າໜ້າທີ່ຕຳຫຼວດ ກວດຄົນເຂົ້າ-ອອກເມືອງ ແລະ ຄຸ້ມຄອງຄົນຕ່າງປະເທດ ມີ ພຶດຕິກຳດັ່ງນີ້:

1. ສວຍໃຊ້ສິດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ;
2. ນຳໃຊ້ສິດ ແລະ ໜ້າທີ່ເກີນຂອບເຂດທີ່ກົດໝາຍກຳນົດ;
3. ຖ່ວງດຶງ ແລະ ແກ່ຍາວຂັ້ນຕອນ, ເວລາ ດຳເນີນເອກະສານ;
4. ໃຊ້ກິລິຍາ ມາລະຍາດທີ່ບໍ່ເໝາະສົມ.

ນອກຈາກຂໍ້ຫ້າມດັ່ງກ່າວນີ້ແລ້ວ ຍັງໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ.

**ມາດຕາ 52 ຂໍ້ຫ້າມສຳລັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ**

ຫ້າມ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ລັກລອບເດີນທາງເຂົ້າ-ອອກ ສປປ ລາວ;
2. ນຳໃຊ້ເອກະສານເດີນທາງຂອງຜູ້ອື່ນ ຫຼື ປອມແປງເອກະສານ;
3. ພັກເຊົາບໍ່ຖືກຕ້ອງ ຫຼື ຢູ່ເກີນກຳນົດເວລາພັກເຊົາ;
4. ໃຫ້ຜົນປະໂຫຍດທີ່ບໍ່ຖືກຕ້ອງ ແກ່ເຈົ້າໜ້າທີ່;

5. ດຳເນີນທຸລະກິດ, ອອກແຮງງານ, ປະກອບອາຊີບ ຫຼື ເຄື່ອນໄຫວວຽກງານໃດໜຶ່ງ ຢູ່ ສປປ ລາວ ໂດຍບໍ່ໄດ້ຮັບອະນຸຍາດ;

6. ເຂົ້າໄປໃນເຂດຫວງຫ້າມ ທີ່ທາງການກຳນົດໄວ້;

7. ແຕ່ງດອງກັບພົນລະເມືອງລາວ ໂດຍບໍ່ໄດ້ຮັບອະນຸຍາດ;

8. ນຳໃຊ້ປຶ້ມຜ່ານແດນ ຫຼື ໃບຜ່ານແດນ ເດີນທາງອອກໄປເກີນຂອບເຂດ ທີ່ກຳນົດໄວ້;

9. ລະເມີດຄວາມສະຫງົບ, ຄວາມປອດໄພ ແລະ ຄວາມໝັ້ນຄົງຂອງຊາດ;

10. ລະເມີດຂະນົບທຳນຽມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ;

11. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 53 **ຂໍ້ຫ້າມສຳລັບພົນລະເມືອງລາວ, ຄົນຕ່າງດ້າວ ແລະ ອົງການຈັດຕັ້ງສັງຄົມ**

ຫ້າມ ພົນລະເມືອງລາວ, ຄົນຕ່າງດ້າວ ແລະ ອົງການຈັດຕັ້ງສັງຄົມ ມີ ພຶດຕິກຳໃດໜຶ່ງ ດັ່ງນີ້:

1. ລັກລອບເດີນທາງເຂົ້າ-ອອກ ສປປ ລາວ;

2. ພົວພັນ, ໃຫ້ການຮ່ວມມື, ອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ເຄື່ອນໄຫວກະທຳຜິດຕໍ່ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີ ອັນດີງາມຂອງຊາດ;

3. ນຳເອົາກິດຈະການ, ທີ່ດິນ, ເຮືອນ ແລະ ເອກະສານດຳເນີນທຸລະກິດຂອງຕົນ ໃຫ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ເຊົ່າ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງ;

4. ໃຫ້ຜົນປະໂຫຍດທີ່ບໍ່ຖືກຕ້ອງແກ່ເຈົ້າໜ້າທີ່;

5. ແຕ່ງດອງກັບຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ໂດຍບໍ່ໄດ້ຮັບອະນຸຍາດ ສຳລັບພົນລະເມືອງລາວ;

6. ນຳໃຊ້ເອກະສານເດີນທາງຂອງຜູ້ອື່ນ ຫຼື ປອມແປງເອກະສານ;

7. ນຳໃຊ້ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ອອກແຮງງານໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

# ພາກທີ VII

# ການແກ້ໄຂການລະເມີດກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ

## ໝວດທີ 1

## ການດຳເນີນຄະດີຕໍ່ຜູ້ລະເມີດ

**ມາດຕາ 54 ການດຳເນີນການສືບສວນ-ສອບສວນ**

ເມື່ອພົບເຫັນ ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ລະເມີດລະບຽບການເຂົ້າ-ອອກ ສປປ ລາວ ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ ດຳເນີນການສອບຖາມເອົາຂໍ້ມູນເບື້ອງຕົ້ນ, ໃນກໍລະນີຈຳເປັນ ກໍສາມາດກັກຕົວ ສີ່ສິບແປດຊົ່ວໂມງ ພ້ອມທັງຍຶດເອກະສານ, ວັດຖຸເຄື່ອງຂອງ, ພາຫະນະທີ່ພົວພັນກັບການກະທຳຜິດ ແລ້ວປະກອບສຳນວນຄະດີສົ່ງໃຫ້ເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນ ດຳເນີນຄະດີຕາມກົດໝາຍ.

ເມື່ອພົບເຫັນຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ລະເມີດລະບຽບການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ເຈົ້າໜ້າທີ່ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ດຳເນີນການສອບຖາມເອົາຂໍ້ມູນເບື້ອງຕົ້ນ, ໃນກໍລະນີຈຳເປັນ ກໍສາມາດກັກຕົວສີ່ສິບແປດຊົ່ວໂມງ ພ້ອມທັງຍຶດເອກະສານ, ວັດຖຸເຄື່ອງຂອງ, ພາຫະນະ ທີ່ພົວພັນກັບການກະທຳຜິດ ແລ້ວປະກອບສຳນວນຄະດີສົ່ງໃຫ້ເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນ ດຳເນີນຄະດີຕາມກົດໝາຍ.

ສຳລັບ ການດຳເນີນຄະດີຕໍ່ນັກທ່ອງທ່ຽວທີ່ເປັນ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ເຈົ້າໜ້າທີ່ຕຳຫຼວດທ່ອງທ່ຽວ ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງ ແລະ ວັກທີສອງ ຂອງມາດຕານີ້.

**ມາດຕາ 55 ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການດຳເນີນຄະດີຕໍ່ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ**

ເຈົ້າໜ້າທີ່ຕຳຫຼວດກວດຄົນເຂົ້າ-ອອກເມືອງ, ເຈົ້າໜ້າທີ່ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ, ເຈົ້າໜ້າທີ່ຕຳຫຼວດທ່ອງທ່ຽວ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງອື່ນ ທີ່ດຳເນີນຄະດີຕໍ່ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ຕ້ອງລາຍງານຕໍ່ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ແລະ ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ພາຍໃນ ສີ່ສິບແປດຊົ່ວໂມງ ແລ້ວໃຫ້ລາຍງານຕໍ່ກົມກົງສຸນ ກະຊວງການຕ່າງປະເທດ.

ໃນກໍລະນີການເສຍຊີວິດຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ເຈົ້າໜ້າທີ່ປະຈຳພື້ນທີ່ບ່ອນເສຍຊີວິດ ແຈ້ງຕໍ່ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ, ກົມຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ແລະ ກົມກົງສຸນ ກະຊວງການຕ່າງປະເທດ ພາຍໃນ ຊາວສີ່ຊົ່ວໂມງ ແລ້ວລາຍງານຂໍຄຳເຫັນຈາກຂັ້ນເທິງ ຫຼື ພາກສ່ວນທີ່ກ່ຽວຂ້ອງ ຕາມລະບຽບການ.

## ໝວດທີ 2
## ການຈັດສົ່ງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ອອກຈາກ ສປປ ລາວ

**ມາດຕາ 56 ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະຖືກສົ່ງອອກຈາກ ສປປ ລາວ**

ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຈະຖືກສົ່ງອອກຈາກ ສປປ ລາວ ມີ ດັ່ງນີ້:

1. ບຸກຄົນທີ່ໄດ້ພົ້ນໂທດ;
2. ບຸກຄົນທີ່ໄດ້ຮັບອະໄພຍະໂທດ;
3. ບຸກຄົນທີ່ເຂົ້າເມືອງຜິດກົດໝາຍ;
4. ບຸກຄົນທີ່ນຳໃຊ້ເອກະສານເດີນທາງບໍ່ຖືກຕ້ອງ;
5. ບຸກຄົນທີ່ລະເມີດ ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ພາຍຫຼັງທີ່ໄດ້ປະຕິບັດສຳເລັດເນື້ອໃນຂໍ້ທີ 3 ຂອງມາດຕາ 13 ຂອງກົດໝາຍສະບັບນີ້.

ສຳລັບ ຂັ້ນຕອນການຈັດສົ່ງກັບຄືນປະເທດ ໃຫ້ປະຕິບັດຕາມລະບຽບການ, ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 57 ການສົ່ງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ອອກຈາກ ສປປ ລາວ**

ກະຊວງປ້ອງກັນຄວາມສະຫງົບ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການສົ່ງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ອອກຈາກ ສປປ ລາວ.

ການສົ່ງຕົວຄົນຕ່າງປະເທດທີ່ມີອະພິສິດ ແລະ ສິດຄຸ້ມຄອງ ຕາມສົນທິສັນຍາລະຫວ່າງປະເທດ ທີ່ ສປປ ລາວ ໄດ້ລົງນາມ ຫຼື ເຂົ້າຮ່ວມເປັນພາຄີ ຈະໄດ້ຮັບການແກ້ໄຂທາງການທູດ.

**ມາດຕາ 58 ຄ່າໃຊ້ຈ່າຍໃນການສົ່ງຜູ້ລະເມີດກົດໝາຍ ແລະ ລະບຽບການ ອອກຈາກ ສປປ ລາວ**

ຜູ້ລະເມີດກົດໝາຍ ແລະ ລະບຽບການ ທີ່ຖືກສົ່ງອອກຈາກ ສປປ ລາວ ເປັນຜູ້ຮັບຜິດຊອບເອງກ່ຽວກັບຄ່າໃຊ້ຈ່າຍໃນການເດີນທາງອອກຈາກ ສປປ ລາວ.

ໃນກໍລະນີທີ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກນຳຜູ້ກ່ຽວເຂົ້າມາ ສປປ ລາວ ກໍຕ້ອງຮັບຜິດຊອບຄ່າໃຊ້ຈ່າຍໃນການຈັດສົ່ງຜູ້ກ່ຽວອອກຈາກ ສປປ ລາວ.

# ພາກທີ VIII

# ການຄຸ້ມຄອງ, ກວດກາ

# ວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

## ໝວດທີ 1

## ການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

### ມາດຕາ 59 ອົງການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງການຕ່າງປະເທດ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານດັ່ງກ່າວ .

ອົງການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ປະກອບດ້ວຍ:

1. ກະຊວງປ້ອງກັນຄວາມສະຫງົບ;
2. ກະຊວງການຕ່າງປະເທດ;
3. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
4. ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

### ມາດຕາ 60 ສິດ ແລະ ໜ້າທີ່ຂອງກະຊວງປ້ອງກັນຄວາມສະຫງົບ

ໃນການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ໂຄສະນາ, ເຜີຍແຜ່ກົດໝາຍ, ລະບຽບການ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ;

3. ຊີ້ນຳການຂຶ້ນບັນຊີ, ຄຸ້ມຄອງສະຖິຕິ, ຕິດຕາມ, ກວດກາ ແລະ ແກ້ໄຂການເຄື່ອນໄຫວຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

4. ຊີ້ນຳ, ນຳພາ, ບັນຊາ, ຄຸ້ມຄອງ, ຕິດຕາມ, ກວດກາ ຕຳຫຼວດກວດຄົນເຂົ້າ-ອອກເມືອງ, ຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ແລະ ຕຳຫຼວດທ່ອງທ່ຽວ ໃນຂອບເຂດທົ່ວປະເທດ;

5. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການຂໍອະນຸຍາດແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

6. ຄົ້ນຄວ້າ ອອກ ຫຼື ລົບລ້າງ ໜັງສືອະນຸຍາດໃຫ້ດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

7. ປະກອບ ພາຫະນະ, ອາວຸດ, ວັດຖູປະກອນເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ແລະ ສະໜອງງົບປະມານ ຢ່າງເໝາະສົມ;

8. ຊີ້ນຳການຊັນນະສູດສະຖານທີ່ເກີດເຫດ ແລະ ຊາກສົບ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

9. ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານວິຊາສະເພາະໃຫ້ພະນັກງານ-ນັກຮົບ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

10. ປະສານສົມທົບ, ປຶກສາຫາລື, ຄົ້ນຄວ້າກ່ຽວກັບວຽກງານທີ່ສຳຄັນ ແລະ ດຳເນີນການແກ້ໄຂບັນຫາ ທີ່ພົວພັນກັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

11. ພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

12. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຕໍ່ລັດຖະບານຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 61 ສິດ ແລະ ໜ້າທີ່ຂອງກະຊວງການຕ່າງປະເທດ**

ໃນການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ກະຊວງການຕ່າງປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ກົດໝາຍ, ລະບຽບການ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ອອກ, ລົບລ້າງ ຫຼື ຖອນ ໜັງສືຜ່ານແດນການທູດ, ໜັງສືຜ່ານແດນລັດຖະການ, ໜັງສືຜ່ານແດນທຳມະດາ ແລະ ເອກະສານເດີນທາງອື່ນທີ່ໃຊ້ແທນ ຂອງພົນລະເມືອງລາວ;

3. ອອກ ຫຼື ລົບລ້າງວີຊາແຈ້ງອອກ ໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ໄດ້ເຮັດໜັງສືຜ່ານແດນເສັຍຫາຍ, ຖືກລັກ ຫຼື ບໍ່ສົມບູນ ພາຍຫຼັງໄດ້ຮັບເຫຼັ້ມໃໝ່;

4. ອອກ ຫຼື ລຶບລ້າງວີຊາເຂົ້າ-ອອກຫຼາຍເທື່ອສຳລັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

5. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການຂໍອະນຸຍາດແຕ່ງດອງ ລະຫວ່າງ ພົນລະເມືອງລາວກັບຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

6. ຄົ້ນຄວ້າ, ມີຄຳເຫັນ ກ່ຽວກັບການຂໍດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

7. ດັດແກ້ ຫຼື ລຶບລ້າງວີຊາເຂົ້າ-ອອກທຸກປະເພດ ທີ່ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່, ສະຖານກົງສຸນ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ແລະ ໜ່ວຍງານວີຊາກັບດ່ານສາກົນ ໃນຂອບເຂດທົ່ວປະເທດໄດ້ອອກໃຫ້ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

8. ຊີ້ນຳບັນດາສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ແລະ ສະຖານກົງສຸນແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດກ່ຽວກັບການຕໍ່ອາຍຸນຳໃຊ້, ລຶບລ້າງ, ຖອນ, ດັດແກ້ ຫຼື ເພີ່ມເຕີມໜັງສືຜ່ານແດນທຸກປະເພດຂອງ ສປປ ລາວ, ບັນດາໜ່ວຍງານວີຊາກັບດ່ານສາກົນ ໃນຂອບເຂດທົ່ວປະເທດ ກ່ຽວກັບວຽກງານວີຊາ ເຂົ້າ-ອອກ ສປປ ລາວ;

9. ຊີ້ນຳການອອກບັດປະຈຳຕົວໃຫ້ພະນັກງານການທູດ, ຫົວໜ້າ ແລະ ຮອງຫົວໜ້າຜູ້ຕາງໜ້າອົງການສະຫະປະຊາຊາດ, ຫົວໜ້າ ແລະ ຮອງຫົວໜ້າອົງການຈັດຕັ້ງສາກົນປະຈຳ ສປປ ລາວ ພ້ອມດ້ວຍ ສະມາຊິກຄອບຄົວ;

10. ຊີ້ນຳການຄຸ້ມຄອງເຕັກໂນໂລຊີກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

11. ຊີ້ນຳ, ຕິດຕາມ ແລະ ກວດກາຕາມສາຍຕັ້ງໃນການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

12. ສ້າງ, ບຳລຸງ ແລະ ຍົກລະດັບທາງດ້ານວິຊາສະເພາະໃຫ້ພະນັກງານ-ລັດຖະກອນກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

13. ຍົກລະດັບມາດຕະຖານໜັງສືຜ່ານແດນ ຂອງ ສປປ ລາວ ຕາມມາດຕະຖານສາກົນ;

14. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

15. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານເຂົ້າ-ອອກ ແລະ ຄຸ້ມຄອງ ຄົນຕ່າງປະເທດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 62 ສິດ ແລະ ໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ**

ໃນການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ກົດໝາຍ, ລະບຽບການ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ຊີ້ນໍາການ ຄຸ້ມຄອງ, ກວດກາ ແລະ ເກັບກໍາ ຂຶ້ນບັນຊີຜູ້ອອກແຮງງານຕ່າງປະເທດທີ່ມາອອກແຮງງານ ຢູ່ ສປປ ລາວ;

3. ຄົ້ນຄວ້າອະນຸຍາດໂກຕ້ານໍາເຂົ້າ, ຊີ້ນໍາ ການຂຶ້ນທະບຽນ ແລະ ການອອກບັດອະນຸຍາດເຮັດວຽກ ໃຫ້ຜູ້ອອກແຮງງານຕ່າງປະເທດ;

4. ກໍານົດເວລາໃນການພິຈາລະນາ ການນໍາເຂົ້າ ແລະ ນໍາໃຊ້ ຜູ້ອອກແຮງງານຕ່າງປະເທດ;

5. ຄຸ້ມຄອງຜູ້ອອກແຮງງານລາວ ທີ່ເຮັດວຽກຢູ່ຕ່າງປະເທດ, ຜູ້ອອກແຮງງານຕ່າງປະເທດທີ່ເຮັດວຽກ ຢູ່ ສປປ ລາວໂດຍມີການປະສານສົມທົບກັບຂະແໜງການອື່ນ ທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ;

6. ສ້າງ, ບໍາລຸງ ແລະ ຍົກລະດັບທາງດ້ານວິຊາສະເພາະໃຫ້ພະນັກງານ-ລັດຖະກອນ ກ່ຽວກັບວຽກງານຄຸ້ມຄອງຜູ້ອອກແຮງງານຕ່າງປະເທດ ຢູ່ ສປປ ລາວ;

7. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງການຕ່າງປະເທດ ໃນການຄຸ້ມຄອງ ແລະ ແກ້ໄຂບັນຫາຜູ້ອອກແຮງງານຕ່າງປະເທດ;

8. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງຜູ້ອອກແຮງງານຕ່າງປະເທດ;

9. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຜູ້ອອກແຮງງານຕ່າງປະເທດ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 63 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຂະແໜງການອື່ນ ເຊັ່ນ ກະຊວງສຶກສາທິການ ແລະ ກິລາ, ກະຊວງກະສິກໍາ ແລະ ປ່າໄມ້, ກະຊວງສາທາລະນະ

ສຸກ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເກັບກຳ, ຂຶ້ນບັນຊີ ແລະ ຄຸ້ມຄອງ ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ;

2. ແຈ້ງບັນຊີຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ໃຫ້ຂະແໜງການປ້ອງກັນຄວາມສະຫງົບ;

3. ປະສານສົມທົບກັບ ຂະແໜງການປ້ອງກັນຄວາມສະຫງົບ, ກະຊວງ ແລະ ພະແນກການຕ່າງປະເທດ ຂອງ ແຂວງ, ນະຄອນ ເພື່ອແກ້ໄຂບັນຫາຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ອອກໃບທະບຽນການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 64 ຄວາມຮັບຜິດຊອບຂອງບຸກຄົນ ແລະ ນິຕິບຸກຄົນ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີສ່ວນພົວພັນກັບ ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຄຸ້ມຄອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ນັບແຕ່ ວັນເຂົ້າມາ ຈົນເຖິງວັນອອກຈາກ ສປປ ລາວ;

2. ແຈ້ງບັນຊີຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ໃຫ້ຂະແໜງການປ້ອງກັນຄວາມສະຫງົບ;

3. ຮ່ວມມືກັບຂະແໜງການປ້ອງກັນຄວາມສະຫງົບ ໃນການແກ້ໄຂຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ລະເມີດກົດໝາຍ ແລະ ລະບຽບການ;

4. ມີຄວາມຮັບຜິດຊອບອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ອົງການກວດກາວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ

**ມາດຕາ 65 ອົງການກວດກາ**

ອົງການກວດກາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນສູນກາງ, ແຂວງ ແລະ ອົງການອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 66 ເນື້ອໃນການກວດກາ**

ການກວດກາ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

2. ການປະຕິບັດນະໂຍບາຍ ແລະ ການນຳໃຊ້ມາດຕະການຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ;

3. ບັນຫາອື່ນ ທີ່ພົວພັນກັບວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ.

**ມາດຕາ 67 ຮູບການການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ;
2. ການກວດການອກແຜນການ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາປົກກະຕິ ແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ.

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນກວດກາວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ໃຫ້ປະຕິບັດຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 68 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ພະນັກງານ ຫຼື ເຈົ້າໜ້າທີ່ຕຳຫຼວດ ທີ່ປະຕິບັດໜ້າທີ່ ທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ເຊັ່ນ ນາມມະຍົດວິລະຊົນ, ນັກຮົບແຂ່ງຂັນ, ຫຼຽນໄຊ, ຫຼຽນກາ, ໃບຍ້ອງຍໍ, ເລື່ອນຊັ້ນ, ເລື່ອນໜ້າທີ່ຮັບຜິດຊອບ, ຮ່ຳຮຽນ ຍົກລະດັບ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

ສຳລັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນວຽກງານເຂົ້າ-ອອກ ແລະ ຄຸ້ມຄອງຄົນຕ່າງປະເທດ ຢູ່ ສປປ ລາວ ຈະໄດ້ຮັບການຍ້ອງຍໍ ຕາມລະບຽບການ.

### ມາດຕາ 69 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງສ້າງຄວາມເສັຍຫາຍໃຫ້ແກ່ ສັງຄົມ, ຊີວິດ, ສຸຂະພາບ, ຊັບສິນຂອງຄົນອື່ນ, ແຕະຕ້ອງເຖິງຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

### ມາດຕາ 70 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ໃນສະຖານເບົາ ເຊັ່ນ ພັກເຊົາບໍ່ຖືກຕ້ອງ, ເອກະສານເດີນທາງເປື້ອນ, ໜ້າວີຊາຂອງໜັງສືຜ່ານແດນເປື້ອນ ອ່ານບໍ່ອອກ, ບັດອະນຸຍາດພັກເຊົາ ຫຼື ບັດປະຈຳຕົວເປື້ອນ, ເຂົ້າເຂດຫວງຫ້າມ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 71 ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສັຍຫາຍບໍ່ຫຼວງຫຼາຍ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກການກະທຳຜິດຂອງຕົນ ກໍຈະຖືກລົງວິໄນ ຕາມລະບຽບການ.

**ມາດຕາ 72 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປັບໃໝໃນກໍລະນີດັ່ງນີ້:

1. ເຂົ້າ-ອອກ ສປປ ລາວ ໂດຍນຳໃຊ້ເອກະສານເດີນທາງບໍ່ຖືກຕ້ອງ;
2. ບໍ່ເຂົ້າ-ອອກຕາມດ່ານເຂົ້າ-ອອກ ທີ່ທາງການກຳນົດ;
3. ນຳໃຊ້ປື້ມຜ່ານແດນ ແລະ ໃບຜ່ານແດນ ເກີນຂອບເຂດ;
4. ພັກເຊົາເກີນກຳນົດທີ່ທາງການອະນຸຍາດ;
5. ເຮັດວຽກບໍ່ຖືກເປົ້າໝາຍຕາມທີ່ທາງການກຳນົດ;
6. ເຂົ້າມາດຳເນີນທຸລະກິດ ຫຼື ອອກແຮງງານໂດຍບໍ່ໄດ້ຮັບອະນຸຍາດ;
7. ເຊົ່າ, ໃຫ້ເຊົ່າ ໃບອະນຸຍາດດຳເນີນທຸລະກິດຂອງພົນລະເມືອງລາວ, ຄົນຕ່າງດ້າວ ໂດຍບໍ່ຖືກຕ້ອງ;
8. ເຂົ້າມາປະກອບອາຊີບຫາລາຍໄດ້ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ອາຊີບທີ່ລັດຖະບານສະຫງວນໄວ້ໃຫ້ພົນລະເມືອງລາວ;
9. ຮັບເອົາຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ເຂົ້າເຮັດວຽກໂດຍບໍ່ມີວີຊາແຮງງານ, ບັດອະນຸຍາດເຮັດວຽກ ແລະ ບັດອະນຸຍາດພັກເຊົາ;
10. ບໍ່ແຈ້ງການພັກເຊົາຂອງຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ;
11. ນຳເຂົ້າຜູ້ອອກແຮງງານຕ່າງປະເທດແລ້ວແຕ່ບໍ່ມີການຄຸ້ມຄອງ ແລະ ນຳໃຊ້ບໍ່ຖືກຕາມເປົ້າໝາຍ ທີ່ທາງການກຳນົດ;
12. ສ້າງຄອບຄົວ ຫຼື ຢູ່ກິນນຳກັນແບບຜົວເມັຍ ຫຼື ແຕ່ງດອງໂດຍບໍ່ໄດ້ຈົດທະບຽນຄອບຄົວຢ່າງຖືກຕ້ອງ;
13. ມີເຈດຕະນາລີ້ຊ່ອນ ຢູ່ ສປປ ລາວ.

ອັດຕາການປັບໃໝ ໃນແຕ່ລະກໍລະນີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 73 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ ຊີວິດ, ສຸຂະພາບ ແລະ ຊັບສິນຂອງບຸກຄົນອື່ນ, ຂອງລັດ ຫຼື ຂອງສ່ວນລວມ ຈະຕ້ອງໃຊ້ແທນຄ່າເສັຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 74 ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ກໍຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 75 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 76 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້